**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ /ສພຊ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ) ກົດໝາຍ
# ວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການປະຕິບັດຄຳຕັດສິນຄະດີແພ່ງ, ຄະດີອາຍາ ກ່ຽວກັບຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ ຫຼື ວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ ເພື່ອເຮັດໃຫ້ຄຳຕັດສິນຂອງສານໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວ ແລະ ເປັນເອກະພາບ ແນໃສ່ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ຂອງກົດໝາຍ, ປົກປ້ອງສິດ, ຜົນປະໂຫຍດຂອງລັດ, ສິດຜົນປະໂຫຍດອັນຊອບທຳ ຂອງບຸກຄົນ, ລວມໝູ່, ການຈັດຕັ້ງ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

### ມາດຕາ 2 (ປັບປຸງ) ການປະຕິບັດຄຳຕັດສິນຂອງສານ

ການປະຕິບັດຄຳຕັດສິນຂອງສານ ແມ່ນການເຄື່ອນໄຫວຂອງອົງການປະຕິບັດຄຳຕັດສິນຂອງສານ ເພື່ອນຳເອົາຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງກົດໝາຍສະບັບນີ້ ມາປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງທີ່ຖືກລະເມີດ ຫຼື ສູນເສຍໄປ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄຳຕັດສິນຂອງສານ** ໝາຍເຖິງ ຄຳຕົກລົງຂອງສານ ຊຶ່ງປະກອບດ້ວຍ: ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນຂອງສານຂັ້ນຕົ້ນ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ຄຳພິພາກສາຂອງສານ;

- **ຄຳສັ່ງຂອງສານ** ໝາຍເຖິງ ຄຳຕົກລົງ ປະເພດໜຶ່ງຂອງສານ ໃຫ້ປະຕິບັດບົດບັນທຶກຜົນການໄກ່ເກ່ຍຂອງສານ;

- **ຄຳຊີ້ຂາດຂອງສານ** ໝາຍເຖິງ ຄຳຕົກລົງ ປະເພດໜຶ່ງຂອງສານ ໃຫ້ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- **ຄຳຕັດສິນຂອງສານ** ໝາຍເຖິງ ຄຳຕົກລົງ ປະເພດໜຶ່ງຂອງສານ ທີ່ຕັດສິນເປັນຂັ້ນຕົ້ນ;
- **ຄຳພິພາກສາຂອງສານ** ໝາຍເຖິງ ຄຳຕົກລົງ ປະເພດໜຶ່ງຂອງສານ ທີ່ຕັດສິນເປັນຂັ້ນອຸທອນ ຫຼື ຂັ້ນລົບລ້າງ;

2. **ບົດບັນທຶກການໄກ່ເກ່ຍຂອງສານ** ໝາຍເຖິງ ເອກະສານຢັ້ງຢືນຜົນຂອງການໄກ່ເກ່ຍຂອງສານ;

3. **ບົດບັນທຶກການໄກ່ເກ່ຍ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ** ໝາຍເຖິງ ເອກະສານຢັ້ງຢືນຜົນຂອງການໄກ່ເກ່ຍ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. **ຄຳຕັດສິນຂອງກຳມະການຕັດສິນ** ໝາຍເຖິງ ຄຳຕັດສິນຂອງຜູ້ຕັດສິນ ຫຼື ຄຳຕັດສິນຂອງຄະນະກຳມະການຕັດສິນ;

5. **ຜູ້ຖືກປະຕິບັດຄຳຕັດສິນຂອງສານ** ໝາຍເຖິງ ຜູ້ມີພັນທະປະຕິບັດສິ່ງໃດໜຶ່ງ ຕາມທີ່ກຳນົດໄວ້ໃນຄຳຕັດສິນຂອງສານ;

6. **ການຍຶດຊັບ** ໝາຍເຖິງ ການເອົາຊັບເຄື່ອນທີ່ໄວ້ເປັນຂອງກາງ ຕາມຄຳສັ່ງຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

7. **ການອາຍັດຊັບ** ໝາຍເຖິງ ການບໍ່ອະນຸຍາດໃຫ້ຊື້, ຂາຍ, ມອບ, ໂອນ, ແລກປ່ຽນ, ຊວດຈຳ, ຄ້ຳປະກັນ, ຕໍ່ເຕີມ, ສ້ອມແປງ, ທຳລາຍ ຫຼື ປ່ຽນແປງ ແລະ ອື່ນໆ ກ່ຽວກັບຊັບເຄື່ອນທີ່ ຫຼື ຊັບຄົງທີ່ ລວມທັງບັນຊີເງິນຝາກໃນທະນາຄານ ທີ່ພົວພັນກັບຄະດີ ຕາມຄຳສັ່ງຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

8. **ການຮິບຊັບ** ໝາຍເຖິງ ການເອົາຊັບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ເປັນກຳມະສິດຂອງຜູ້ກະທຳຜິດມາເປັນຂອງລັດ ຕາມຄຳຕັດສິນຂອງສານ ໂດຍບໍ່ມີການໃຊ້ແທນ;

9. **ການຮິບວັດຖຸສິ່ງຂອງ** ໝາຍເຖິງ ການເອົາຊັບ, ວັດຖຸສິ່ງຂອງ ທີ່ພົວພັນກັບການກະທຳຜິດ, ນຳໃຊ້ໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດມາເປັນຂອງລັດ ຫຼື ທຳລາຍຖິ້ມ ຕາມຄຳຕັດສິນຂອງສານ;

10. **ການໂຈະການປະຕິບັດຄຳຕັດສິນ** ໝາຍເຖິງ ການຢຸດ ການປະຕິບັດຄຳຕັດສິນຂອງສານໄວ້ຊົ່ວຄາວ ເມື່ອໝົດສາເຫດຂອງການໂຈະແລ້ວກໍຕ້ອງສືບຕໍ່ປະຕິບັດ;

11. **ການປ່ຽນແປງການປະຕິບັດຄຳຕັດສິນ** ໝາຍເຖິງ ການປ່ຽນແປງການປະຕິບັດຄຳຕັດສິນຂອງສານ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄຳຕັດສິນຂອງສານ ຫຼື ກົດໝາຍ;

12. **ການຍົກເລີກການປະຕິບັດຄຳຕັດສິນ** ໝາຍເຖິງ ການຢຸດເຊົາໂດຍບໍ່ໃຫ້ສືບຕໍ່ປະຕິບັດຄຳຕັດສິນຂອງສານ;

13. **ການລົບລ້າງການປະຕິບັດຄຳຕັດສິນ** ໝາຍເຖິງ ການຍົກເລີກທັງໝົດການປະຕິບັດຄຳຕັດສິນຂອງສານ ຜ່ານມາແຕ່ຕົ້ນຕະຫຼອດປາຍ;

14. **ການປະຕິບັດພາງ** ໝາຍເຖິງ ການປະຕິບັດຄຳຕັດສິນຂອງສານ ສ່ວນໃດສ່ວນໜຶ່ງ ທີ່ເຫັນວ່າມີຄວາມຈຳເປັນຮີບດ່ວນກ່ອນຄຳຕັດສິນ ຫຼື ຄຳພິພາກສານັ້ນ ໃຊ້ໄດ້ຢ່າງເດັດຂາດ ຕາມຄຳຕັດສິນຂອງສານຂັ້ນຕົ້ນ ຫຼື ຂັ້ນອຸທອນ.

**ມາດຕາ 4 (ໃໝ່) ນະໂຍບາຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ**

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການປະຕິບັດຄຳຕັດສິນຂອງສານ ດ້ວຍການວາງນະໂຍບາຍ, ກຳນົດລະບຽບການ, ສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ອຸປະກອນຮັບໃຊ້ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມວ່ອງໄວ, ຖືກຕ້ອງ ແລະ ເປັນທຳ.

ລັດ ສົ່ງເສີມການໂຄສະນາ, ສຶກສາອົບຮົມ ໃຫ້ພົນລະເມືອງບັນດາເຜົ່າ, ການຈັດຕັ້ງຂອງລັດ, ຂອງສັງຄົມ, ວິສາຫະກິດຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມືໃນການປະຕິບັດຄຳຕັດສິນຂອງສານ.

**ມາດຕາ 5 (ປັບປຸງ) ຫຼັກການ ໃນການປະຕິບັດຄຳຕັດສິນຂອງສານ**

ຫຼັກການ ໃນການປະຕິບັດຄຳຕັດສິນຂອງສານ ມີດັ່ງນີ້:

1. ຖືກຕ້ອງຕາມກົດໝາຍ, ຄຳຕັດສິນຂອງສານ ແລະ ຄວາມເປັນຈິງ;
2. ສະເໝີພາບ;
3. ສຶກສາອົບຮົມ;
4. ເຂັ້ມງວດ, ວ່ອງໄວແລະຍຸຕິທຳ;
5. ປະສານສົມທົບ;
6. ໂປ່ງໃສ.

**ມາດຕາ 6 (ປັບປຸງ) ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ**

ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແມ່ນ ຄຳຕັດສິນ ຫຼື ຄຳພິພາກສາ ຊຶ່ງຄູ່ຄວາມ, ບຸກຄົນທີສາມ ບໍ່ໄດ້ຂໍອຸທອນ, ບໍ່ໄດ້ຂໍລົບລ້າງ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ; ຄຳຊີ້ຂາດ, ຄຳພິພາກສາຂອງສານປະຊາຊົນສູງສຸດ; ຄຳສັ່ງໃຫ້ປະຕິບັດຜົນການໄກ່ເກ່ຍຂອງສານ; ຄຳຊີ້ຂາດກ່ຽວກັບການປະຕິບັດບົດບັນທຶກການໄກ່ເກ່ຍ ຫຼື ຄຳຕັດສິນຂອງກຳມະການຕັດສິນ ພາຍໃນ; ຄຳຕັດສິນ ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ຫຼື ຄຳຕັດສິນຢັ້ງຢືນ ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ.

**ມາດຕາ 7 (ປັບປຸງ) ຄຳຕັດສິນຂອງສານ ທີ່ນຳມາປະຕິບັດ**

ຄຳຕັດສິນຂອງສານ ທີ່ນຳມາປະຕິບັດ ມີດັ່ງນີ້:

1. ຄຳຕັດສິນ ແລະ ຄຳພິພາກສາຄະດີແພ່ງ ທີ່ໃຊ້ໄດ້ຢ່າງເດັດຂາດ;
2. ຄຳຕັດສິນ ແລະ ຄຳພິພາກສາຄະດີອາຍາ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ ຫຼື ວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ;
3. ຄຳຊີ້ຂາດ ແລະ ຄຳພິພາກສາຄະດີແພ່ງ ຂອງສານປະຊາຊົນສູງສຸດ ທີ່ບໍ່ສົ່ງຄະດີໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່;
4. ຄຳຊີ້ຂາດ ແລະ ຄຳພິພາກສາຄະດີອາຍາ ຂອງສານປະຊາຊົນສູງສຸດ ທີ່ບໍ່ສົ່ງຄະດີໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່ ກ່ຽວກັບຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ ຫຼື ວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ;
5. ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ໃຫ້ປະຕິບັດພາງ;
6. ຄຳສັ່ງໃຫ້ປະຕິບັດບົດບັນທຶກການໄກ່ເກ່ຍຂອງສານ;
7. ຄຳຊີ້ຂາດຂອງສານ ໃຫ້ປະຕິບັດບົດບັນທຶກການໄກ່ເກ່ຍ ແລະ ຄຳຕັດສິນ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

8. ຄຳຕັດສິນ ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ;

9. ຄຳຕັດສິນ ຢັ້ງຢືນຄຳຕັດສິນ ຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ຕາມສົນທິສັນຍາລະຫວ່າງປະເທດ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າຮ່ວມເປັນພາຄີ.

**ມາດຕາ 8 (ປັບປຸງ) ຜົນບັງຄັບປະຕິບັດຂອງຄຳຕັດສິນຂອງສານ**

ຄຳຕັດສິນຂອງສານ ທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງກົດໝາຍສະບັບນີ້ ມີຜົນບັງຄັບຕໍ່ບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຊຶ່ງຕ້ອງໄດ້ປະຕິບັດຢ່າງເຂັ້ມງວດ.

ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ ພ້ອມທັງມີພັນທະໃຫ້ການຮ່ວມມື, ຊ່ວຍເຫຼືອອັນຈຳເປັນ ຕໍ່ການປະຕິບັດຄຳຕັດສິນຂອງສານ.

**ມາດຕາ 9 (ປັບປຸງ) ການສົ່ງຄຳຕັດສິນຂອງສານ**

ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ສານປະຊາຊົນ ຕ້ອງສົ່ງໃຫ້ອົງການປະຕິບັດຄຳຕັດສິນຂອງສານ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

ພາຍຫຼັງໄດ້ຮັບຄຳຕັດສິນແລ້ວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ສົ່ງຄຳຕັດສິນໃຫ້ຄູ່ຄວາມໄປປະຕິບັດ ດ້ວຍຄວາມສະໝັກໃຈ ພາຍໃນກຳນົດເວລາ ຫ້າວັນລັດຖະການ ພ້ອມທັງແນະນຳສິດໃນການຮ້ອງຂໍ ໃຫ້ປະຕິບັດຄຳຕັດສິນຂອງສານ.

**ມາດຕາ 10 (ໃໝ່) ຄວາມສະໝັກໃຈ ແລະ ການຮ້ອງຂໍ ປະຕິບັດຄຳຕັດສິນຂອງສານ**

ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ຄູ່ຄວາມນຳໄປປະຕິບັດ ດ້ວຍຄວາມສະໝັກໃຈ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຊາບຄຳຕັດສິນຂອງສານ ເປັນຕົ້ນໄປ.

ໃນໄລຍະເວລາການປະຕິບັດດ້ວຍຄວາມສະໝັກໃຈ ຄູ່ຄວາມ ມີສິດສະເໜີຕໍ່ອົງການປະຕິບັດຄຳຕັດສິນຂອງສານ ນຳໃຊ້ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 37 ຂອງກົດໝາຍສະບັບນີ້.

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ສະໝັກໃຈປະຕິບັດ ຜູ້ໄດ້ຮັບຄວາມອັບປະໂຫຍດ ມີສິດຮ້ອງຂໍຕໍ່ອົງການປະຕິບັດຄຳຕັດສິນຂອງສານ ເພື່ອບັງຄັບປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 11 (ໃໝ່) ພາສາ ທີ່ນຳໃຊ້ເຂົ້າໃນການປະຕິບັດຄຳຕັດສິນຂອງສານ**

ການປະຕິບັດຄຳຕັດສິນຂອງສານ ຕ້ອງນຳໃຊ້ພາສາລາວ, ໃນກໍລະນີ ທີ່ມີເອກະສານເປັນພາສາຕ່າງປະເທດ, ພາສາເຜົ່າ ຫຼື ມີຜູ້ເຂົ້າຮ່ວມໃດໜຶ່ງ ໃນການປະຕິບັດຄຳຕັດສິນຂອງສານ ຫາກບໍ່ຮູ້ພາສາລາວ ກໍໃຫ້ແປເປັນພາສາລາວ ຫຼື ມີຜູ້ແປພາສາ.

**ມາດຕາ 12 (ໃໝ່) ການປົກປ້ອງ**

ພະນັກງານປະຕິບັດຄຳຕັດສິນຂອງສານ ລວມທັງຜູ້ເຂົ້າຮ່ວມໃນການປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດ ຊື່ສຽງ ຊັບສິນສ່ວນຕົວ ຫຼື ຂອງຄອບຄົວ.

**ມາດຕາ 13 (ໃໝ່) ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ແກ່ພະນັກງານປະຕິບັດຄຳຕັດສິນຂອງສານ ໂດຍສອດຄ່ອງກັບສັນຍາ ແລະ ສົນທິສັນຍາ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ.

## ພາກທີ II
## ການປະຕິບັດຄຳຕັດສິນຄະດີແພ່ງ

### ໝວດທີ 1
### ການຮ້ອງຂໍ

**ມາດຕາ 14 (ປັບປຸງ) ບ່ອນປະຕິບັດຄຳຕັດສິນຂອງສານ**

ບ່ອນປະຕິບັດຄຳຕັດສິນຂອງສານ ມີດັ່ງນີ້:

1. ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ກະຊວງຍຸຕິທຳ;
2. ກອງປະຕິບັດຄຳຕັດສິນຂອງສານ ແຂວງ, ນະຄອນຫຼວງ;
3. ໜ່ວຍປະຕິບັດຄຳຕັດສິນຂອງສານ ເມືອງ, ເທດສະບານ, ນະຄອນ.

ກອງປະຕິບັດຄຳຕັດສິນຂອງສານ ສາມາດປະຕິບັດຄຳຕັດສິນຂອງສານປະຊາຊົນເມືອງ, ເທດສະບານ, ນະຄອນ ໃນກໍລະນີ ບໍ່ມີໜ່ວຍປະຕິບັດຄຳຕັດສິນຂອງສານ ຫຼື ຕາມການສະເໜີຂອງໜ່ວຍປະຕິບັດຄຳຕັດສິນຂອງສານ.

**ມາດຕາ 15 (ໃໝ່) ຄຳຮ້ອງຂໍ ໃຫ້ປະຕິບັດຄຳຕັດສິນຂອງສານ**

ອົງການປະຕິບັດຄຳຕັດສິນຂອງສານ ຈະນຳເອົາ ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ມາປະຕິບັດ ກໍຕໍ່ເມື່ອມີຄຳຮ້ອງຂໍ ຂອງຄູ່ຄວາມຝ່າຍໃດໜຶ່ງ, ບຸກຄົນທີສາມ ຫຼື ຜູ້ໄດ້ຮັບມອບສິດ ຍົກເວັ້ນການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຜົນປະໂຫຍດຂອງລັດ, ເດັກ ແລະ ການລົ້ມລະລາຍຂອງວິສາຫະກິດ.

ຜູ້ທີ່ມີຈຸດປະສົງ ຮ້ອງຂໍໃຫ້ປະຕິບັດຄຳຕັດສິນຂອງສານ ສາມາດຍື່ນຄຳຮ້ອງຂໍຕໍ່ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ໂດຍກົງ ຫຼື ຜ່ານທາງໄປສະນີ.

**ມາດຕາ 16 (ໃໝ່) ອາຍຸຄວາມ ໃນການຮ້ອງຂໍໃຫ້ປະຕິບັດຄຳຕັດສິນຂອງສານ**

ອາຍຸຄວາມໃນການຮ້ອງຂໍໃຫ້ປະຕິບັດຄຳຕັດສິນຂອງສານ ມີກຳນົດເວລາ ສາມເດືອນ ນັບແຕ່ວັນທີ່ຮູ້ວ່າຕົນໄດ້ຮັບຄວາມອັບປະໂຫຍດ ເປັນຕົ້ນໄປ.

ໃນກໍລະນີ ມີສະພາບການ ຫຼື ເຫດສຸດວິໄສໃດໜຶ່ງເກີດຂຶ້ນ ເຮັດໃຫ້ບໍ່ສາມາດຍື່ນຄຳຮ້ອງຂໍໃຫ້ປະຕິບັດຄຳຕັດສິນຂອງສານໄດ້, ໄລຍະເວລາດັ່ງກ່າວ ບໍ່ໃຫ້ນັບເຂົ້າໃນອາຍຸຄວາມໃນການຮ້ອງຂໍ.

**ມາດຕາ 17 (ໃໝ່) ເອກະສານປະກອບ**

ເອກະສານປະກອບຄຳຮ້ອງຂໍ ໃຫ້ປະຕິບັດຄຳຕັດສິນຂອງສານ ມີດັ່ງນີ້:

1. ຄຳຮ້ອງຕາມແບບພິມທີ່ກະຊວງຍຸຕິທຳ ກຳນົດ;

2. ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
3. ຂໍ້ມູນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ລວມທັງຊັບສິນຂອງຜູ້ກ່ຽວ;
4. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 18 (ໃໝ່) ການກວດກາຄຳຮ້ອງຂໍ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍແລ້ວ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງກວດກາເອກະສານປະກອບ ແລ້ວຈົດເຂົ້າປຶ້ມບັນທຶກ, ອອກໜັງສືຮັບໃຫ້ແກ່ຜູ້ຍື່ນຄຳຮ້ອງ ແລະ ມອບໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ຜູ້ໃດໜຶ່ງ ຮັບຜິດຊອບກວດກາເນື້ອໃນ ຄຳຮ້ອງຂໍ, ເອກະສານປະກອບ, ຂໍ້ມູນຄຳຕັດສິນຂອງສານ ໃນຖານຂໍ້ມູນ ພາຍໃນກຳນົດເວລາ ສອງວັນລັດຖະການ. ຖ້າເຫັນວ່າ ຄຳຮ້ອງຂໍ ແລະ ເອກະສານປະກອບນັ້ນ ຫາກຖືກຕ້ອງ ແລະ ຄົບຖ້ວນແລ້ວ ໃຫ້ຜູ້ຮ້ອງຂໍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ ພ້ອມທັງລາຍງານ ໃຫ້ຫົວໜ້າກົມ, ກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ ເພື່ອອອກຄຳສັ່ງປະຕິບັດ.

ໃນກໍລະນີ ຄຳຮ້ອງຂໍ ແລະ ເອກະສານປະກອບນັ້ນ ຫາກບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ກໍໃຫ້ແນະນຳຜູ້ຮ້ອງຂໍເພື່ອໄປປັບປຸງແກ້ໄຂ.

**ມາດຕາ 19 (ໃໝ່) ການບໍ່ຮັບຄຳຮ້ອງຂໍ**

ອົງການປະຕິບັດຄຳຕັດສິນຂອງສານ ຈະບໍ່ຮັບຄຳຮ້ອງມາພິຈາລະນາ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຮ້ອງຂໍ ບໍ່ກ່ຽວຂ້ອງກັບຄະດີ ຫຼື ບໍ່ໄດ້ຮັບມອບສິດໃຫ້ຮ້ອງຂໍ;
2. ການຮ້ອງຂໍ ບໍ່ກ່ຽວຂ້ອງກັບເນື້ອໃນຂອງຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
3. ອົງການປະຕິບັດຄຳຕັດສິນຂອງສານ ທີ່ຮັບຄຳຮ້ອງຂໍ ບໍ່ມີສິດອຳນາດໃນການປະຕິບັດຄຳຕັດສິນຂອງສານນັ້ນ;
4. ອາຍຸຄວາມ ໃນການຮ້ອງຂໍໝົດກຳນົດ.

ໃນກໍລະນີ ບໍ່ຮັບຄຳຮ້ອງຂໍມາພິຈາລະນານັ້ນ ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ຕ້ອງໄດ້ແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ພ້ອມທັງແນະນຳຜູ້ຮ້ອງຂໍ.

**ມາດຕາ 20 (ໃໝ່) ການອອກຄຳສັ່ງປະຕິບັດຄຳຕັດສິນຂອງສານ**

ຫົວໜ້າກົມ, ກອງ, ໜ່ວຍປະຕິບັດຄຳຕັດສິນຂອງສານ ຕ້ອງອອກຄຳສັ່ງປະຕິບັດຄຳຕັດສິນຂອງສານ ພາຍໃນກຳນົດເວລາ ສາມວັນລັດຖະການ ນັບແຕ່ວັນໄດ້ຮັບການລາຍງານ ຈາກພະນັກງານປະຕິບັດຄຳຕັດສິນຂອງສານ ຜູ້ຮັບຜິດຊອບກວດກາເນື້ອໃນຄຳຮ້ອງຂໍ ເປັນຕົ້ນໄປ.

ຄຳສັ່ງປະຕິບັດຄຳຕັດສິນຂອງສານ ຕ້ອງສົ່ງໃຫ້ຄູ່ຄວາມ, ບຸກຄົນທີສາມ ແລະ ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ.

## ໝວດທີ 2
## ການຄົ້ນຄວ້າຄຳຕັດສິນຂອງສານ

**ມາດຕາ 21 (ປັບປຸງ) ການຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ**

ພາຍຫຼັງມີຄຳສັ່ງປະຕິບັດຄຳຕັດສິນຂອງສານແລ້ວ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຄົ້ນຄວ້າຄຳຕັດສິນຂອງສານ ໃຫ້ລະອຽດ, ເຂົ້າໃຈ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ພ້ອມກັນນັ້ນ ກໍກະກຽມເງື່ອນໄຂຕ່າງໆ ເພື່ອປະຕິບັດ ດັ່ງນີ້:

- ສະຫຼຸບເນື້ອໃນຄຳຕັດສິນຂອງສານ ທີ່ຈະນຳມາປະຕິບັດ;

- ສ້າງແຜນການ ກ່ຽວກັບການປະຕິບັດ;
- ເງື່ອນໄຂອື່ນທີ່ເຫັນວ່າຈຳເປັນ.

**ມາດຕາ 22 (ປັບປຸງ) ການຖອນຕົວ ແລະ ການຄ້ານຕົວ**

ພະນັກງານປະຕິບັດຄຳຕັດສິນຂອງສານ ມີສິດຖອນຕົວອອກຈາກການປະຕິບັດຄຳຕັດສິນຂອງສານ ຖ້າຫາກເຫັນວ່າຕົນເປັນ ຍາດພີ່ນ້ອງ, ມີຜົນປະໂຫຍດຮ່ວມ ຫຼື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດໜຶ່ງ. ພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ຈະຖອນຕົວຕ້ອງສະເໜີເຈດຈຳນົງຂອງຕົນ ພ້ອມດ້ວຍເຫດຜົນຢ່າງເປັນລາຍລັກອັກສອນ ຕໍ່ຫົວໜ້າກົມ, ກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ.

ຄູ່ຄວາມ ມີສິດຄ້ານຕົວພະນັກງານປະຕິບັດຄຳຕັດສິນຂອງສານ ຖ້າຫາກເຫັນວ່າມີສາເຫດຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂອງມາດຕານີ້. ການຄ້ານຕົວ ຕ້ອງສະເໜີເຈດຈຳນົງຂອງຕົນພ້ອມດ້ວຍເຫດຜົນ ຢ່າງເປັນລາຍລັກອັກສອນ ຕໍ່ອົງການປະຕິບັດຄຳຕັດສິນຂອງສານ ເພື່ອພິຈາລະນາ.

ພາຍຫຼັງໄດ້ຮັບການສະເໜີຖອນຕົວ ຫຼື ຄ້ານຕົວ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງພິຈາລະນາ ພາຍໃນກຳນົດເວລາ ສິບຫ້າວັນ, ຖ້າວ່າການສະເໜີຖອນຕົວ ຫຼື ຄ້ານຕົວ ຫາກມີເຫດຜົນພຽງພໍ ກໍໃຫ້ຖອນຕົວ ແລ້ວມອບຄະດີໃຫ້ຜູ້ໃໝ່ສືບຕໍ່ປະຕິບັດ.

**ມາດຕາ 23 (ປັບປຸງ) ການແຈ້ງໃຫ້ປະຕິບັດຄຳຕັດສິນຂອງສານ**

ການແຈ້ງໃຫ້ປະຕິບັດຄຳຕັດສິນຂອງສານ ປະຕິບັດ ດັ່ງນີ້:

1. ຮຽກຄູ່ຄວາມເຂົ້າມາ ອົງການປະຕິບັດຄຳຕັດສິນຂອງສານ ພາຍໃນກຳນົດ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຄົ້ນຄວ້າຄຳຕັດສິນສຳເລັດ ເພື່ອແຈ້ງເນື້ອໃນຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຊາບ ພ້ອມທັງແນະນຳ ແລະ ຊຸກຍູ້ໃຫ້ປະຕິບັດ. ໃນເວລາຄູ່ຄວາມ ຫຼື ຜູ້ຖືກປະຕິບັດຄຳຕັດສິນ ເຂົ້າມາຮັບຊາບການແຈ້ງນັ້ນ ຕ້ອງເຮັດບົດບັນທຶກທຸກຄັ້ງ ແລະ ລົງລາຍເຊັນ ຫຼື ແປະໂປ້ມື, ຖ້າຜູ້ກ່ຽວຫາກບໍ່ຍອມລົງລາຍເຊັນໃນບົດບັນທຶກ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຂຽນລົງໃນບົດບັນທຶກນັ້ນໄວ້;

2. ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນ ບໍ່ເຂົ້າມາອົງການປະຕິບັດຄຳຕັດສິນຂອງສານ ຕາມໝາຍຮຽກ. ພາຍໃນກຳນົດເວລາ ຫ້າວັນລັດຖະການ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງລົງໄປແຈ້ງກ່ຽວກັບການປະຕິບັດຄຳຕັດສິນ ຕາມທີ່ຢູ່ຂອງຜູ້ຖືກປະຕິບັດຄຳຕັດສິນ ໂດຍແຈ້ງໃຫ້ຍາດໃກ້ຊິດຜູ້ໃດໜຶ່ງ ທີ່ອາໄສຢູ່ຮ່ວມກັນກັບຜູ້ກ່ຽວ ເຊັ່ນ ຜົວ, ເມຍ, ພໍ່, ແມ່ ຫຼື ລູກ ແລະ ໃຫ້ຜູ້ຖືກແຈ້ງນັ້ນ ເຊັນຮັບຮູ້;

3. ໃນກໍລະນີ ບໍ່ສາມາດແຈ້ງໂດຍກົງ ຫຼື ໃຫ້ຍາດໃກ້ຊິດໄດ້ ໃຫ້ຕິດຄຳສັ່ງປະຕິບັດຄຳຕັດສິນ ຢູ່ອົງການປົກຄອງບ້ານ ແລະ ບ່ອນຢູ່ສຸດທ້າຍ ຂອງຜູ້ຖືກປະຕິບັດຄຳຕັດສິນ ແລ້ວເຮັດບົດບັນທຶກຮ່ວມກັບອົງການປົກຄອງບ້ານ;

4. ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ມີທີ່ຢູ່ບໍ່ແນ່ນອນ ຫຼື ບໍ່ຮູ້ທີ່ຢູ່ຂອງຜູ້ກ່ຽວ ບົນພື້ນຖານການສະເໜີຂອງຄູ່ຄວາມໃດໜຶ່ງ ໃຫ້ແຈ້ງຜ່ານພາຫະນະສື່ມວນຊົນ ຕາມກົດໝາຍທີ່ກ່ຽວຂ້ອງ.

ການແຈ້ງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ແລະ ຂໍ້ 4 ເທິງນີ້ ໃຫ້ຖືວ່າຜູ້ຖືກປະຕິບັດຄຳຕັດສິນ ໄດ້ຮັບຊາບ ຫຼັງຈາກ ສິບວັນ ນັບແຕ່ມື້ໄດ້ແຈ້ງ ເປັນຕົ້ນໄປ.

## ໝວດທີ 3
## ການປະຕິບັດຄຳຕັດສິນຂອງສານ

**ມາດຕາ 24 (ປັບປຸງ) ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ພາຍຫຼັງໄດ້ແຈ້ງໃຫ້ປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂອງກົດໝາຍສະບັບນີ້ ໃຫ້ຜູ້ຖືກປະຕິບັດຄຳຕັດສິນ ຈັດຕັ້ງປະຕິບັດພັນທະຕ່າງໆຕາມຄຳຕັດສິນຂອງສານ ພາຍໃນກຳນົດສາມສິບວັນ ນັບແຕ່ວັນໄດ້ຮັບການແຈ້ງ ເປັນຕົ້ນໄປ. ໃນກຳນົດເວລາດັ່ງກ່າວ ຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກມີເຈດຕະນາຫຼົບຫຼີກການປະຕິບັດນັ້ນ ອົງການປະຕິບັດຄຳຕັດສິນຂອງສານ ກໍສາມາດ ກວດກາ, ຂຶ້ນບັນຊີຊັບສິນຂອງຜູ້ກ່ຽວ, ອອກຄຳສັ່ງອາຍັດຊັບ ຫຼື ຍຶດຊັບ ຖ້າວ່າມາດຕະການດັ່ງກ່າວ ຫາກຍັງບໍ່ທັນໄດ້ນຳໃຊ້ມາກ່ອນ.

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກບໍ່ປະຕິບັດ ຫຼື ປະຕິບັດບໍ່ຄົບຖ້ວນ ພາຍໃນກຳນົດເວລາທີ່ກຳນົດໄວ້ໃນ ວັກໜຶ່ງ ຂອງມາດຕານີ້ ອົງການປະຕິບັດຄຳຕັດສິນຂອງສານ ສາມາດນຳໃຊ້ມາດຕະການໃນການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 36 ຂອງກົດໝາຍສະບັບນີ້.

**ມາດຕາ 25 (ໃໝ່) ການກວດກາ ແລະ ຂຶ້ນບັນຊີຊັບ**

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນ ຫາກບໍ່ປະຕິບັດ ຫຼື ປະຕິບັດຍັງບໍ່ທັນຄົບຖ້ວນ ຕາມຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງກວດກາ ແລະ ຂຶ້ນບັນຊີຊັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງປະສານສົມທົບພາກສ່ວນກ່ຽວຂ້ອງ ລົງກວດກາຊັບ ຢູ່ສະຖານທີ່ສົງໄສວ່າມີຊັບຂອງຜູ້ຖືກປະຕິບັດຄຳຕັດສິນ ເຊັ່ນ ບ້ານ, ສະຖາບັນການເງິນ ຫຼື ບ່ອນອື່ນທີ່ກ່ຽວຂ້ອງ.

ເຈົ້າໜີ້ມີພັນທະສະໜອງຂໍ້ມູນເປັນລາຍລັກອັກສອນ ກ່ຽວກັບຊັບຂອງຜູ້ປະຕິບັດຄຳຕັດສິນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ.

ໃນການກວດກາຊັບ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງເຮັດບົດບັນທຶກ ພ້ອມທັງຂຽນລາຍລະອຽດຂອງຊັບທີ່ກວດພົບ ໂດຍການເຂົ້າຮ່ວມຂອງເຈົ້າຂອງຊັບ ແລະ ອົງການປົກຄອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ. ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງລາຍງານຜົນຂອງການລົງກວດກາ ຕໍ່ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານ ໃນກໍລະນີ ຈຳເປັນຕ້ອງສະເໜີອອກຄຳສັ່ງອາຍັດ ຫຼື ຍຶດຊັບທີ່ກວດພົບນັ້ນໄວ້.

**ມາດຕາ 26 (ໃໝ່) ການຕີລາຄາຊັບ**

ຊັບ ທີ່ອົງການປະຕິບັດຄຳຕັດສິນຂອງສານ ໄດ້ອອກຄຳສັ່ງອາຍັດ, ຍຶດ ຫຼື ຊັບທີ່ເປັນຫຼັກຊັບຄ້ຳປະກັນ ຕາມທີ່ກຳນົດໄວ້ໃນຄຳຕັດສິນຂອງສານ ອົງການປະຕິບັດຄຳຕັດສິນຂອງສານ ສາມາດດຳເນີນການຕີລາຄາຊັບ ດ້ວຍຮູບການ ດັ່ງນີ້:

1. ຮຽກຄູ່ຄວາມ ມາຕົກລົງລາຄາຊັບ ແລ້ວປະກາດຂາຍຊັບຕາມລາຄາທີ່ຄູ່ຄວາມຕົກລົງກັນ;

2. ໃຫ້ຄູ່ຄວາມ ສະເໜີອົງການປະຕິບັດຄຳຕັດສິນຂອງສານ ເພື່ອແຕ່ງຕັ້ງຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ນິຕິບຸກຄົນໃດໜຶ່ງ ໃຫ້ຕີລາຄາຊັບ ແລ້ວໃຫ້ຖືເອົາລາຄານັ້ນ ເປັນລາຄາປະກາດຂາຍ;

3. ໃນກໍລະນີ ຄູ່ຄວາມບໍ່ສາມາດຕົກລົງກັນໄດ້ ຕາມ ຂໍ້ 1 ແລະ ຂໍ້ 2 ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ແຕ່ງຕັ້ງຄະນະກຳມະການຕີລາຄາຊັບ ຊຶ່ງປະກອບມີ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ຈາກຂະແໜງການທີ່ກ່ຽວຂ້ອງ. ຄູ່ຄວາມ ມີສິດສະເໜີຄັດຄ້ານ ການຕີລາຄາຊັບ ຕໍ່ອົງການປະຕິບັດຄຳຕັດສິນຂອງສານຂັ້ນເທິງຖັດໄປ ພາຍໃນກຳນົດເວລາ ເຈັດວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງຜົນການແຈ້ງຕີລາຄາຊັບ. ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ຕ້ອງພິຈາລະນາການສະເໜີຄັດຄ້ານ ພາຍໃນກຳນົດເວລາ ສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີຄັດຄ້ານ ເປັນຕົ້ນໄປ.

**ມາດຕາ 27 (ໃໝ່) ການຍົກຍ້າຍ**

ຊັບ ທີ່ຈະຂາຍ ຫຼື ມອບ ເພື່ອໄລ່ລຽງໃຊ້ແທນໜີ້ສິນ ຊຶ່ງມີຜູ້ອາໄສຢູ່ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງອອກຄຳສັ່ງ ໃຫ້ຜູ້ຢູ່ອາໄສຍົກຍ້າຍອອກຈາກຊັບດັ່ງກ່າວ ໃນກຳນົດເວລາບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳສັ່ງຍົກຍ້າຍ ເປັນຕົ້ນໄປ.

ໃນກໍລະນີ ທີ່ຜູ້ຢູ່ອາໄສ ຫາກບໍ່ຍົກຍ້າຍຕາມຄຳສັ່ງ ໃຫ້ປະຕິບັດ ດັ່ງນີ້:

1. ສ້າງແຜນການຍົກຍ້າຍ;
2. ແຕ່ງຕັ້ງຄະນະກຳມະການຍົກຍ້າຍ;
3. ດຳເນີນການຍົກຍ້າຍ;
4. ສະຫຼຸບລາຍງານ ການຍົກຍ້າຍຕໍ່ອົງການໄອຍະການປະຊາຊົນ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນ.

ກໍລະນີ ຜູ້ຖືກຍົກຍ້າຍ ບໍ່ມີບ່ອນຢູ່ ຫຼື ບ່ອນເກັບມ້ຽນວັດຖຸສິ່ງຂອງ ກ່ອນການຍົກຍ້າຍ ເຈົ້າໜີ້ຕ້ອງຊອກ ຫຼື ເຊົ່າບ່ອນຢູ່ ໃຫ້ຜູ້ຖືກຍົກຍ້າຍຕາມຄວາມເໝາະສົມ ແຕ່ບໍ່ໃຫ້ເກີນ ໜຶ່ງປີ.

ໃນກໍລະນີ ຜູ້ຖືກຍົກຍ້າຍ ຫຼື ເຈົ້າຂອງຊັບ ບໍ່ເຂົ້າຄຸ້ມຄອງ ຫຼື ຮັບເອົາຊັບ ທີ່ຖືກຍົກຍ້າຍຢູ່ສະຖານທີ່ເຊົ່າ ພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນຍົກຍ້າຍ ເປັນຕົ້ນໄປ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ແຈ້ງໃຫ້ຜູ້ຖືກຍົກຍ້າຍ ຫຼື ເຈົ້າຂອງຊັບ ເຂົ້າຄຸ້ມຄອງ ຫຼື ຮັບເອົາຊັບ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນອອກແຈ້ງການ ເປັນຕົ້ນໄປ. ຖ້າຜູ້ກ່ຽວບໍ່ເຂົ້າຄຸ້ມຄອງ ຫຼື ຮັບເອົາຊັບດັ່ງກ່າວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ຂາຍຊັບຕາມລະບຽບການ ແລະ ນຳເງິນທີ່ຂາຍນັ້ນໄປຝາກໄວ້ຢູ່ທະນາຄານ ແລ້ວແຈ້ງຜູ້ກ່ຽວມາຮັບເອົາເງິນ.

ໃນການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການມອບ ຫຼື ການສົ່ງຊັບຄືງທີ່ຄືນ ຕາມຄຳຕັດສິນຂອງສານ ຖ້າຊັບດັ່ງກ່າວຍັງມີຜູ້ຄອບຄອງ ຫຼື ຜູ້ຢູ່ອາໄສ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງດຳເນີນຕາມວັກໜຶ່ງ, ສອງ ແລະ ສາມ ຂອງມາດຕານີ້.

**ມາດຕາ 28 (ໃໝ່) ການຂາຍຊັບ**

ພາຍຫຼັງອົງການປະຕິບັດຄຳຕັດສິນຂອງສານ ໄດ້ອອກແຈ້ງການໃຫ້ຜູ້ຖືກປະຕິບັດ ຫຼື ເຈົ້າຂອງຊັບຂາຍຊັບແລ້ວ ແລະ ມີຜູ້ສະເໜີຊື້ຊັບດັ່ງກ່າວ ແຕ່ຜູ້ກ່ຽວບໍ່ຍິນຍອມປະຕິບັດ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຂາຍຊັບ.

ການຂາຍຊັບ ສາມາດດຳເນີນໄດ້ດ້ວຍ ສອງ ວິທີດັ່ງນີ້:

1. ການຂາຍຊັບ ໂດຍເຈົ້າຂອງຊັບ ຊຶ່ງຕ້ອງແຈ້ງຕໍ່ອົງການປະຕິບັດຄຳຕັດສິນຂອງສານ ແລະ ການຂາຍນັ້ນ ຕ້ອງບໍ່ໃຫ້ຫຼຸດລາຄາທີ່ໄດ້ຕີລາຄາ ຫຼື ຫຼຸດ ແຕ່ໃຫ້ພຽງພໍກັບໜີ້ສິນ, ຄ່າທຳນຽມສານ ແລະ ຄ່າໃຊ້ຈ່າຍໃນການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 26 ຂອງກົດໝາຍສະບັບນີ້;
2. ການຂາຍຊັບ ໂດຍອົງການປະຕິບັດຄຳຕັດສິນຂອງສານ ຊຶ່ງສາມາດດຳເນີນການຂາຍໃນວົງແຄບ ຫຼື ປະມູນເປີດກວ້າງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ຜູ້ຊື້ຈະໄດ້ກຳມະສິດຕໍ່ຊັບ ກໍຕໍ່ເມື່ອໄດ້ຊຳລະເງິນຄົບຕາມຈຳນວນ ຫຼື ໄດ້ຂຶ້ນທະບຽນຊັບ ເປັນຕົ້ນໄປ. ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ຜູ້ຊື້ ໃນການເຂົ້າຄອບຄອງ ແລະ ຂຶ້ນທະບຽນຊັບດັ່ງກ່າວ.

**ມາດຕາ 29 (ໃໝ່) ການມອບຊັບ**

ຊັບ ທີ່ໄດ້ຜ່ານການຕີລາຄາ, ປະກາດຂາຍແລ້ວ ແຕ່ຊັບດັ່ງກ່າວບໍ່ໄດ້ຂາຍ ໃຫ້ປະຕິບັດຕາມກໍລະນີດັ່ງນີ້:

1. ຊັບ ທີ່ເປັນຫຼັກຊັບຄ້ຳປະກັນ ທີ່ມີມູນຄ່າເທົ່າກັບ ຫຼື ຫຼຸດໜີ້ສິນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງອອກຄຳສັ່ງມອບຊັບດັ່ງກ່າວໃຫ້ເຈົ້າໜີ້. ຖ້າຊັບຄ້ຳປະກັນນັ້ນ ຫາກມີມູນຄ່າສູງກວ່າໜີ້ສິນ ແຕ່ສາມາດແບ່ງໄດ້ ໃຫ້ອອກຄຳສັ່ງແບ່ງເອົາຊັບດັ່ງກ່າວ ຕາມມູນຄ່າໜີ້ສິນ ເພື່ອມອບໃຫ້ແກ່ເຈົ້າໜີ້ ຫຼື ໃນກໍລະນີເຈົ້າໜີ້ເຫັນດີຮັບເອົາ ແລະ ສົ່ງເງິນທີ່ເຫຼືອຄືນໃຫ້ລູກໜີ້ ກໍໃຫ້ອອກຄຳສັ່ງມອບໃຫ້ແກ່ເຈົ້າໜີ້, ຊັບຄ້ຳປະກັນທີ່ມີມູນຄ່າສູງ ຊຶ່ງບໍ່ສາມາດປະຕິບັດໄດ້ໃນສອງກໍລະນີທີ່ກ່າວມາຂ້າງເທິງນີ້ ໃຫ້ອົງການປະຕິບັດຄຳຕັດສິນຂອງສານສືບຕໍ່ປະກາດຂາຍ;

2. ຊັບ ທີ່ບໍ່ເປັນຫຼັກຊັບຄ້ຳປະກັນ ແຕ່ເຈົ້າໜີ້ເຫັນດີຮັບເອົາຊັບດັ່ງກ່າວ ເພື່ອໃຊ້ແທນໜີ້ສິນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງອອກຄຳສັ່ງມອບຊັບດັ່ງກ່າວໃຫ້ເຈົ້າໜີ້. ຖ້າຫາກວ່າເຈົ້າໜີ້ບໍ່ເຫັນດີເອົາຊັບດັ່ງກ່າວກໍໃຫ້ສືບຕໍ່ຂາຍ ຕາມກົດໝາຍ;

3. ຊັບ ທີ່ສານຕັດສິນໃຫ້ລັດຄຸ້ມຄອງ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງຂຶ້ນບັນຊີ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອກວດກາ ແລະ ມອບຊັບດັ່ງກ່າວ ໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 30 (ໃໝ່) ການສົ່ງເອກະສານ**

ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງສົ່ງເອກະສານທີ່ກ່ຽວຂ້ອງກັບຊັບ ເປັນຕົ້ນ ໃບທະບຽນ, ໃບຕາດິນ, ພັນທະບັດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຄຳຕັດສິນຂອງສານ.

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກບໍ່ສົ່ງເອກະສານດັ່ງກ່າວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງໃຫ້ສົ່ງເອກະສານນັ້ນ. ແຕ່ຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຍັງບໍ່ປະຕິບັດຕາມຄຳສັ່ງ ກໍໃຫ້ອົງການປະຕິບັດຄຳຕັດສິນຂອງສານ ສະເໜີຕໍ່ອົງການຈັດຕັ້ງ ທີ່ມີສິດອຳນາດກ່ຽວຂ້ອງລົບລ້າງ ແລ້ວອອກເອກະສານໃໝ່ ຕາມແຕ່ລະກໍລະນີ.

**ມາດຕາ 31 (ໃໝ່) ການມອບເງິນ ທີ່ອົງການປະຕິບັດຄຳຕັດສິນຂອງສານຮັກສາ**

ໃນກໍລະນີ ອົງການປະຕິບັດຄຳຕັດສິນຂອງສານ ໄດ້ຮັບເງິນ ຫຼື ຮັກສາເງິນ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເພື່ອໃຊ້ແທນໃຫ້ແກ່ເຈົ້າໜີ້ ແຕ່ເຈົ້າໜີ້ດັ່ງກ່າວຍັງມີພັນທະປະຕິບັດຄຳຕັດສິນຄະດີອື່ນ ຊຶ່ງຜູ້ກ່ຽວຍັງບໍ່ທັນໄດ້ປະຕິບັດ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງມອບເງິນດັ່ງກ່າວນັ້ນ ໃຫ້ເຈົ້າໜີ້ຂອງຜູ້ກ່ຽວຕາມຄຳຕັດສິນຂອງສານ.

ພາຍຫຼັງໄດ້ຮັບຄຳສັ່ງແລ້ວ ພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ຮັບຜິດຊອບຄະດີ ຕ້ອງແຈ້ງໃຫ້ເຈົ້າໜີ້ ທີ່ມີພັນທະປະຕິບັດຄຳຕັດສິນຄະດີອື່ນນັ້ນຊາບ ແລະ ເຂົ້າຮ່ວມໃນການປະຕິບັດ, ຖ້າຜູ້ກ່ຽວບໍ່ເຂົ້າຮ່ວມໂດຍບໍ່ມີເຫດຜົນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງມອບເງິນໃຫ້ເຈົ້າໜີ້ຂອງຜູ້ກ່ຽວ.

**ມາດຕາ 32 (ປັບປຸງ) ການປະຕິບັດແທນ**

ໃນກໍລະນີ ທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກຍົກຍ້າຍໄປຢູ່ບ່ອນອື່ນກ່ອນການປະຕິບັດຄຳຕັດສິນຂອງສານ ຫຼື ການປະຕິບັດຍັງບໍ່ທັນສິ້ນສຸດນັ້ນ ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ສາມາດໂອນການປະຕິບັດຄຳຕັດສິນດັ່ງກ່າວ ໄປໃຫ້ອົງການປະຕິບັດຄຳຕັດສິນຂອງສານ ບ່ອນຜູ້ຖືກປະຕິບັດຄຳຕັດສິນຂອງສານຍ້າຍໄປຢູ່ນັ້ນ ເປັນຜູ້ປະຕິບັດແທນ.

ຖ້າວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກມີຊັບຢູ່ຫຼາຍເມືອງ ຫຼື ຢູ່ຫຼາຍແຂວງ ອົງການປະຕິບັດຄຳຕັດສິນຂອງສານ ທີ່ຮັບຜິດຊອບປະຕິບັດຄຳຕັດສິນດັ່ງກ່າວ ສາມາດສະເໜີໃຫ້ອົງການປະຕິບັດຄຳຕັດສິນຂອງສານ ບ່ອນມີຊັບຢູ່ນັ້ນປະຕິບັດແທນຕົນກໍໄດ້ ຈົນກວ່າຈະຄົບຈຳນວນໜີ້ສິນຕາມຄຳຕັດສິນຂອງສານ.

**ມາດຕາ 33 (ປັບປຸງ) ຄ່າທຳນຽມສານ ແລະ ຄ່າໃຊ້ຈ່າຍ ໃນການປະຕິບັດຄຳຕັດສິນຂອງສານ**

ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງຮັບຜິດຊອບຈ່າຍຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນຂອງສານ ຊຶ່ງຕ້ອງມອບໃຫ້ອົງການປະຕິບັດຄຳຕັດສິນຂອງສານ ໃນເວລາປະຕິບັດຄຳຕັດສິນຂອງສານ ເພື່ອມອບເຂົ້າງົບປະມານຂອງລັດ. ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກບໍ່ຈ່າຍທຳນຽມສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ນຳໃຊ້ມາດຕາການໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 35 ຂອງກົດໝາຍສະບັບນີ້.

ຄ່າໃຊ້ຈ່າຍໃນການປະຕິບັດຄຳຕັດສິນຂອງສານ ແມ່ນຄ່າສິ້ນເປືອງ ໃນການປະຕິບັດຄຳຕັດສິນຂອງສານ ເຊັ່ນ ຄ່າໃຊ້ຈ່າຍໃຫ້ແກ່ຜູ້ເຂົ້າຮ່ວມ, ຄ່າໃຊ້ຈ່າຍໃນການປະກາດຂາຍຊັບ, ຄ່າໃຊ້ຈ່າຍໃນການພາຕົວ, ຄ່າໃຊ້ຈ່າຍໃນການຍົກຍ້າຍ, ຄ່າສຳເນົາເອກະສານ ແມ່ນຕົກຢູ່ໃນຄວາມຮັບຜິດຊອບຂອງຜູ້ຖືກປະຕິບັດຄຳຕັດສິນ. ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນ ຫາກບໍ່ຍິນຍອມຈ່າຍຄ່າໃຊ້ຈ່າຍດັ່ງກ່າວ ໃຫ້ຜູ້ຮ້ອງຂໍຈ່າຍກ່ອນ ແລ້ວໃຫ້ອົງການປະຕິບັດຄຳຕັດສິນຂອງສານ ນຳໃຊ້ມາດຕາການໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 35 ຂອງກົດໝາຍສະບັບນີ້ ເພື່ອຄິດໄລ່ທົດແທນຄືນ. ໃນກໍລະນີ ຜູ້ຖືກປະຕິບັດ ຫາກບໍ່ມີເງື່ອນໄຂປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 34 ຂອງກົດໝາຍສະບັບນີ້ ໃຫ້ເປັນຄວາມຮັບຜິດຊອບຂອງຜູ້ຮ້ອງຂໍ.

**ມາດຕາ 34 (ໃໝ່) ຄຳຕັດສິນຂອງສານ ທີ່ບໍ່ມີເງື່ອນໄຂປະຕິບັດ**

ຄຳຕັດສິນຂອງສານ ທີ່ບໍ່ມີເງື່ອນໄຂປະຕິບັດ ມີດັ່ງນີ້:

1. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີຊັບສິນ ຫຼື ບໍ່ມີລາຍຮັບ, ມີລາຍຮັບຕໍ່າ ພຽງແຕ່ພໍຮັບປະກັນການດຳລົງຊີວິດຂອງຕົນເທົ່ານັ້ນ;
2. ບໍ່ຮູ້ບ່ອນຢູ່ທີ່ແນ່ນອນ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ກັບຄືນປະເທດ.

ເງື່ອນໄຂທີ່ບໍ່ສາມາດປະຕິບັດໄດ້ ຕ້ອງມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ.

ຜ່ານການປະຕິບັດ ຫາກເຫັນວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີເງື່ອນໄຂປະຕິບັດ ຕາມຂໍ້ 1 ແລະ ຂໍ້ 2 ເທິງນີ້ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງອອກຄຳສັ່ງຊັດມ້ຽນຄຳຮ້ອງ ແລ້ວແຈ້ງໃຫ້ຜູ້ຮ້ອງຂໍຊາບ ພາຍໃນກຳນົດເວລາ ເຈັດວັນລັດຖະການ ນັບແຕ່ວັນອອກຄຳສັ່ງເປັນຕົ້ນໄປ.

ຜູ້ຮ້ອງຂໍ ມີສິດຮ້ອງຂໍໃຫ້ປະຕິບັດຄືນໃໝ່ ຫາກວ່າຜູ້ຖືກປະຕິບັດຄຳຕັດສິນ ມີເງື່ອນໄຂປະຕິບັດ.

## ໝວດທີ 4
## ມາດຕະການປະຕິບັດ

**ມາດຕາ 35 (ໃໝ່) ມາດຕະການ ໃນການປະຕິບັດຄຳຕັດສິນຂອງສານ**

ມາດຕະການ ໃນການປະຕິບັດຄຳຕັດສິນຂອງສານ ມີດັ່ງນີ້:

1. ການພາຕົວ;
2. ການຍຶດ ຫຼື ອາຍັດຊັບ;
3. ການປັບໃໝ;
4. ການຫັກເງິນ ໃນບັນຊີຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
5. ການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
6. ການຫັກລາຍໄດ້ຈາກການດຳເນີນທຸລະກິດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
7. ການມອບເງິນ ທີ່ບຸກຄົນອື່ນຮັກສາ ຫຼື ມີໜີ້ຕ້ອງສົ່ງ;
8. ມາດຕະການອື່ນ.

**ມາດຕາ 36 (ໃໝ່) ການພາຕົວ**

ໃນກໍລະນີ ທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກ ໂດຍບໍ່ມີເຫດຜົນພຽງພໍນັ້ນ ອົງການປະຕິບັດຄຳຕັດສິນຂອງສານ ຈະອອກຄຳສັ່ງໃຫ້ພາຕົວຜູ້ກ່ຽວ.

ການພາຕົວ ໃຫ້ປະຕິບັດໄດ້ແຕ່ເວລາ ຫົກໂມງ ຫາ ສິບແປດໂມງ ເວັ້ນເສຍແຕ່ ໃນກໍລະນີ ທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຈະເອົາຕົວຫຼົບໜີ ຫຼື ບໍ່ຮູ້ບ່ອນຢູ່ທີ່ແນ່ນອນ.

ອົງການປະຕິບັດຄຳຕັດສິນຂອງສານ ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ເພື່ອພາຕົວຜູ້ຖືກປະຕິບັດຄຳຕັດສິນຂອງສານ ເຂົ້າມາພົບພະນັກງານປະຕິບັດຄຳຕັດສິນຂອງສານ ຕາມທີ່ກຳນົດໄວ້ໃນຄຳສັ່ງ. ກ່ອນການພາຕົວ ເຈົ້າໜ້າທີ່ຕ້ອງອ່ານຄຳສັ່ງ ໃຫ້ຜູ້ຖືກພາຕົວ ຊາບ.

**ມາດຕາ 37 (ໃໝ່) ການຍຶດ ຫຼື ອາຍັດຊັບ**

ໃນກໍລະນີ ທີ່ໄດ້ຮູ້ແຈ້ງກ່ຽວກັບ ປະເພດ, ຈຳນວນ, ບັນຊີຊັບ ຫຼື ສະຖານທີ່ເກັບມ້ຽນ ວັດຖຸສິ່ງຂອງ, ສິນຄ້າ ຫຼື ປະເພດສັງຫາລິມະຊັບ ທີ່ເປັນປະໂຫຍດໃຫ້ແກ່ການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຍຶດຊັບດັ່ງກ່າວ ມາຮັກສາໄວ້ໃນສະຖານທີ່ເໝາະສົມ. ໃນກໍລະນີ ຊັບທີ່ກວດພົບນັ້ນ ເປັນບັນຊີເງິນຝາກ, ອະສັງຫາລິມມະຊັບ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງອາຍັດຊັບດັ່ງກ່າວໄວ້.

ພະນັກງານປະຕິບັດຄຳຕັດສິນຂອງສານ ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງ ເພື່ອປະຕິບັດຄຳສັ່ງຍຶດນັ້ນ.

ຖ້າຊັບສິ່ງຂອງທີ່ຖືກ ອາຍັດ ຫຼື ຍຶດນັ້ນ ຫາກມີຄວາມຈຳເປັນຕ້ອງມີການຄຸ້ມຄອງ ຫຼື ແກ້ໄຂຢ່າງຮີບດ່ວນ ເນື່ອງຈາກວ່າຊັບສິ່ງຂອງດັ່ງກ່າວ ຈະມີການປ່ຽນຮູບ ຫຼື ເສື່ອມຄຸນນະພາບ, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງຄຸ້ມຄອງ, ປົກປັກຮັກສາ ຫຼື ຂາຍເອົາເງິນມາໄວ້ ເພື່ອປະຕິບັດຄຳຕັດສິນຂອງສານ ໃນຂັ້ນຕໍ່ໄປ.

ຊັບທີ່ບໍ່ອານຸຍາດໃຫ້ ຍຶດ ຫຼື ອາຍັດ ມີດັ່ງນີ້:

1. ສິ່ງສັກກາລະບູຊາ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
2. ອາຫານສຳລັບກິນປະຈຳວັນ ແລະ ຢາປົວພະຍາດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
3. ວັດຖຸສິ່ງຂອງ ທີ່ໃຊ້ເປັນປະຈຳຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແລະ ຂອງບຸກຄົນ ຊຶ່ງຢູ່ພາຍໃຕ້ການດູແລລ້ຽງດູຂອງຜູ້ກ່ຽວ ເຊັ່ນ ເຄື່ອງນຸ່ງຫົ່ມ, ເຄື່ອງນອນ, ເຄື່ອງຄົວກິນ ແລະ ເຄື່ອງຫຼິ້ນເດັກນ້ອຍ;
4. ວັດຖຸສິ່ງຂອງທີ່ຈຳເປັນ ສຳລັບການປະກອບອາຊີບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ.

**ມາດຕາ 38 (ປັບປຸງ) ການປັບໃໝ**

ພາຍຫຼັງ ອົງການປະຕິບັດຄຳຕັດສິນຂອງສານ ໄດ້ອອກຄຳສັ່ງ ຍຶດຊັບ ຫຼື ອາຍັດຊັບແລ້ວ ແຕ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ຍອມປະຕິບັດຕາມຄຳຕັດສິນຂອງສານ ທັງໆທີ່ມີຄວາມສາມາດໃຊ້ແທນໄດ້ ແຕ່ມີເຈດຕະນາບໍ່ປະຕິບັດ ຊຶ່ງແກ່ຍາວເວລາເກີນ ສາມສິບວັນ ນັ້ນ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ ຂອງມູນຄ່າທີ່ຍັງບໍ່ທັນໄດ້ໃຊ້ແທນ, ຖ້າຫາກກາຍກຳນົດເກີນ ຫົກສິບວັນ ຈະຖືກປັບໃໝ ສາມສ່ວນຮ້ອຍ ຂອງມູນຄ່າທີ່ຍັງບໍ່ທັນໄດ້ໃຊ້ແທນ ນັບແຕ່ວັນອອກຄຳສັ່ງ ເປັນຕົ້ນໄປ.

ເງິນຄ່າປັບໃໝ ກ່ຽວກັບການປະຕິບັດຄຳຕັດສິນຂອງສານທັງໝົດ ໃຫ້ມອບເຂົ້າງົບປະມານຂອງລັດ.

**ມາດຕາ 39 (ໃໝ່) ການຫັກເງິນໃນບັນຊີ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ມີຄຳສັ່ງອາຍັດບັນຊີເງິນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແຕ່ຜູ້ກ່ຽວຍັງບໍ່ປະຕິບັດ ຫຼື ປະຕິບັດບໍ່ຄົບຖ້ວນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກເງິນໃນບັນຊີດັ່ງກ່າວ ໃນຈຳນວນຍັງຄ້າງປະຕິບັດ ເພື່ອປະຕິບັດຄຳຕັດສິນຂອງສານ.

ອົງການຈັດຕັ້ງ ທີ່ຄຸ້ມຄອງບັນຊີເງິນທີ່ກ່ຽວຂ້ອງ ຕ້ອງຫັກ ແລະ ໂອນເງິນ ຕາມຈຳນວນທີ່ກຳນົດໄວ້ໃນຄຳສັ່ງ ເຂົ້າບັນຊີຂອງອົງການປະຕິບັດຄຳຕັດສິນຂອງສານ ຫຼື ບັນຊີຂອງເຈົ້າໜີ້ຕາມຄຳສັ່ງ ພາຍໃນກຳນົດເວລາ ເຈັດວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສັ່ງ ເປັນຕົ້ນໄປ.

**ມາດຕາ 40 (ໃໝ່) ການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີຊັບທີ່ຈະນຳມາປະຕິບັດ ແຕ່ຜູ້ກ່ຽວມີລາຍຮັບເປັນຕົ້ນ ເງິນເດືອນ, ຄ່າແຮງງານ, ເງິນອຸດໜູນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກເອົາລາຍຮັບດັ່ງກ່າວ ເພື່ອປະຕິບັດຄຳຕັດສິນຂອງສານ.

ການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນ ສູງສຸດບໍ່ໃຫ້ເກີນ ສາມສິບ ສ່ວນຮ້ອຍ ຂອງລາຍຮັບທັງໝົດໃນແຕ່ລະເດືອນ, ຍົກເວັ້ນຄູ່ຄວາມໄດ້ຕົກລົງກັນ ຫຼື ຕາມຄຳຕັດສິນຂອງສານ.

ສຳລັບຜູ້ຖືກປະຕິບັດຄຳຕັດສິນ ທີ່ມີລາຍໄດ້ບໍ່ປົກກະຕິ ແມ່ນໃຫ້ຫັກໂດຍອີງໃສ່ລາຍໄດ້ຕົວຈິງ ແຕ່ຕ້ອງຮັບປະກັນເງື່ອນໄຂການດຳລົງຊີວິດຂອງຜູ້ກ່ຽວ ແລະ ບຸກຄົນທີ່ຢູ່ໃນຄວາມຮັບຜິດຊອບລ້ຽງດູ.

ອົງການຈັດຕັ້ງ ຫຼື ບຸກຄົນ ບ່ອນທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ມີລາຍຮັບ ຕ້ອງປະຕິບັດຕາມຄຳສັ່ງດັ່ງກ່າວ ແລະ ມອບເງິນທີ່ຫັກນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

**ມາດຕາ 41 (ໃໝ່) ການຫັກລາຍໄດ້ ຈາກການດຳເນີນທຸລະກິດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນ ຫາກແມ່ນວິສາຫະກິດ ຊຶ່ງມີລາຍໄດ້ຈາກການດຳເນີນທຸລະກິດ ແລະ ມີເງື່ອນໄຂສືບຕໍ່ດຳເນີນທຸລະກິດ ແຕ່ບໍ່ປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກລາຍໄດ້ດັ່ງກ່າວ ໂດຍອີງໃສ່ເງື່ອນໄຂຕົວຈິງຂອງການດຳເນີນທຸລະກິດ ແລະ ຄ່າໃຊ້ຈ່າຍບໍລິຫານວິສາຫະກິດ ເພື່ອປະຕິບັດຄຳຕັດສິນຂອງສານ.

ອົງການຈັດຕັ້ງ ຫຼື ບຸກຄົນ ທີ່ມີພັນທະມອບລາຍໄດ້ໃຫ້ຜູ້ຖືກປະຕິບັດຄຳຕັດສິນ ຕ້ອງປະຕິບັດຕາມຄຳສັ່ງດັ່ງກ່າວ ແລະ ມອບ ຫຼື ໂອນເງິນທີ່ຫັກນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

**ມາດຕາ 42 (ໃໝ່) ການມອບເງິນ ທີ່ບຸກຄົນອື່ນຮັກສາ ຫຼື ມີໜີ້ຕ້ອງສົ່ງ**

ໃນກໍລະນີ ມີຫຼັກຖານຢ່າງຈະແຈ້ງຢັ້ງຢືນວ່າບຸກຄົນອື່ນ ໄດ້ຮັກສາເງິນ ຫຼື ມີໜີ້ຕ້ອງສົ່ງ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງໃຫ້ບຸກຄົນດັ່ງກ່າວມອບເງິນໃຫ້ອົງການປະຕິບັດຄຳຕັດສິນຂອງສານ.

ຜູ້ຮັກສາເງິນ ຫຼື ມີໜີ້ຕ້ອງສົ່ງ ຕ້ອງມອບເງິນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ຕາມຈຳນວນ ແລະ ກຳນົດເວລາທີ່ໄດ້ກຳນົດໄວ້ໃນຄຳສັ່ງ.

ກ່ອນການມອບເງິນໃຫ້ເຈົ້າໜີ້ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານຊາບ ແລະ ເຂົ້າຮ່ວມໃນການປະຕິບັດ, ຖ້າຜູ້ກ່ຽວບໍ່ເຂົ້າຮ່ວມໂດຍບໍ່ມີເຫດຜົນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງມອບເງິນໃຫ້ເຈົ້າໜີ້ຂອງຜູ້ກ່ຽວ.

**ມາດຕາ 43 (ປັບປຸງ) ຜົນບັງຄັບປະຕິບັດຂອງຄຳສັ່ງ ຂອງອົງການປະຕິບັດຄຳຕັດສິນຂອງສານ**

ຄຳສັ່ງຂອງອົງການປະຕິບັດຄຳຕັດສິນຂອງສານ ທີ່ອອກຢ່າງຖືກຕ້ອງ ໃນຂອບເຂດ ສິດ ແລະ ໜ້າທີ່ຂອງຕົນ ເພື່ອປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງກົດໝາຍສະບັບນີ້ ໃຫ້ຖືຄືກັນກັບຄຳສັ່ງຂອງສານ ແລະ ມີຜົນບັງຄັບປະຕິບັດ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງກົດໝາຍສະບັບນີ້.

ການຫຼີກລ້ຽງບໍ່ປະຕິບັດຕາມຄຳສັ່ງດັ່ງກ່າວ ໂດຍເຈດຕະນາ ຫຼື ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານ ຈະຖືກດຳເນີນຄະດີຕາມກົດໝາຍ.

## ໝວດທີ 5
## ການສິ້ນສຸດການປະຕິບັດຄຳຕັດສິນຂອງສານ

**ມາດຕາ 44 (ປັບປຸງ) ການສິ້ນສຸດການປະຕິບັດຄຳຕັດສິນຂອງສານ**

ການປະຕິບັດຄຳຕັດສິນຂອງສານ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ຄຳຕັດສິນຂອງສານ ໄດ້ປະຕິບັດຢ່າງຄົບຖ້ວນແລ້ວ;
2. ເຈົ້າໜີ້ ໄດ້ສະລະສິດ, ໃນກໍລະນີ ທີ່ເຈົ້າໜີ້ໄດ້ຮັບໝາຍຮຽກສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສະເໜີຕົວ ຕໍ່ພະນັກງານປະຕິບັດຄຳຕັດສິນຂອງສານ ໂດຍບໍ່ມີເຫດຜົນພຽງພໍ ກໍໃຫ້ຖືວ່າເປັນການສະລະສິດເຊັ່ນດຽວກັນ;
3. ຄູ່ຄວາມ ມີການຕົກລົງເຫັນດີ ສະລະສິດບໍ່ປະຕິບັດຕາມຄຳຕັດສິນຂອງສານ ຊຶ່ງການຕົກລົງນັ້ນບໍ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ຜູ້ຖືກປະຕິບັດ ໄດ້ເສຍຊີວິດໂດຍບໍ່ມີຊັບ, ບໍ່ມີສິດ ໃຫ້ຜູ້ອື່ນສືບທອດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
5. ເຈົ້າໜີ້ ໄດ້ເສຍຊີວິດ ຊຶ່ງສິດ ແລະ ຜົນປະໂຫຍດຂອງບຸກຄົນດັ່ງກ່າວ ທີ່ໄດ້ຮັບຕາມຄຳຕັດສິນຂອງສານ ບໍ່ສາມາດມອບໃຫ້ຜູ້ສືບທອດ ຫຼື ບໍ່ມີຜູ້ສືບທອດມູນມໍຣະດົກ;
6. ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ໄດ້ຖືກປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ໂດຍບໍ່ໃຫ້ຄູ່ຄວາມມີພັນທະປະຕິບັດ;
7. ມີຄຳຕັດສິນ ໃຫ້ຍົກເລີກພັນທະການປະຕິບັດຄຳຕັດສິນກ່ຽວກັບ ຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ.

**ມາດຕາ 45 (ໃໝ່) ການປິດຄະດີ**

ເມື່ອການປະຕິບັດຄຳຕັດສິນຂອງສານໄດ້ສິ້ນສຸດແລ້ວ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງສະຫຼຸບລາຍງານ ໃຫ້ຫົວໜ້າກົມ, ກອງ, ໜ່ວຍປະຕິບັດຄຳຕັດສິນຂອງສານ ເພື່ອອອກຄຳສັ່ງປິດຄະດີ.

**ມາດຕາ 46 (ໃໝ່) ການແຈ້ງຄຳສັ່ງປິດຄະດີ**

ພາຍຫຼັງອອກຄຳສັ່ງປິດຄະດີແລ້ວ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງສົ່ງຄຳສັ່ງດັ່ງກ່າວໃຫ້ຄູ່ຄວາມ, ອົງການໄອຍະການປະຊາຊົນ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນອອກຄຳສັ່ງ ເປັນຕົ້ນໄປ.

**ມາດຕາ 47 (ໃໝ່) ການຂໍລຶບລ້າງຄໍາສັ່ງປິດຄະດີ**

ໃນກໍລະນີ ຄູ່ຄວາມ, ບຸກຄົນທີ່ກ່ຽວຂ້ອງ ມີຂໍ້ມູນຫຼັກຖານຢັ້ງຢືນວ່າການປະຕິບັດ ບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ສອດຄ່ອງຕາມຄໍາຕັດສິນຂອງສານ ກໍມີສິດຮ້ອງຂໍ, ສະເໜີຕໍ່ອົງການປະຕິບັດຄໍາຕັດສິນຂອງສານຂັ້ນເທິງຖັດໄປ ເພື່ອພິຈາລະນາລຶບລ້າງຄໍາສັ່ງປິດຄະດີ ພາຍໃນກໍານົດເວລາ ສິບວັນ ນັບແຕ່ວັນໄດ້ຮັບຄໍາສັ່ງປິດຄະດີ ເປັນຕົ້ນໄປ, ອົງການປະຕິບັດຄໍາຕັດສິນຂອງສານທີ່ກ່ຽວຂ້ອງ ຕ້ອງພິຈາລະນາການສະເໜີນັ້ນ ພາຍໃນກໍານົດເວລາ ສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ, ຄໍາສະເໜີ ເປັນຕົ້ນໄປ.

**ມາດຕາ 48 ການຮັກສາສໍານວນຄະດີ**

ສໍານວນຄະດີທີ່ໄດ້ປະຕິບັດຄໍາຕັດສິນຂອງສານສິ້ນສຸດແລ້ວ ໃຫ້ຮັກສາໄວ້ ຊາວປີ ນັບແຕ່ວັນອອກຄໍາສັ່ງປິດສໍານວນຄະດີເປັນຕົ້ນໄປ, ຫຼັງຈາກນັ້ນຈຶ່ງທໍາລາຍຖິ້ມ.

## ພາກທີ III
## ການປະຕິບັດຄໍາຕັດສິນຄະດີອາຍາ ກ່ຽວກັບຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ ຫຼື ວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ

**ມາດຕາ 49 (ໃໝ່) ການປະຕິບັດຄໍາຕັດສິນຄະດີອາຍາ**

ການປະຕິບັດຄໍາຕັດສິນຄະດີອາຍາ ກ່ຽວກັບໂທດປັບໃໝ, ໂທດຮິບຊັບ ຫຼື ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ ໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ດໍາເນີນການປະຕິບັດໂດຍບໍ່ມີຄໍາຮ້ອງຂໍໃຫ້ປະຕິບັດ.

**ມາດຕາ 50 (ປັບປຸງ) ການປະຕິບັດຄໍາຕັດສິນຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ**

ການປະຕິບັດຄໍາຕັດສິນຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ ໃຫ້ປະຕິບັດຕາມ ພາກທີ II ຂອງກົດໝາຍສະບັບນີ້.

ສໍາລັບຜູ້ທີ່ຍັງປະຕິບັດໂທດຢູ່, ຜູ້ທີ່ໄດ້ຮັບການອະໄພຍະໂທດ ຫຼື ພົ້ນໂທດແລ້ວ ກໍຕ້ອງປະຕິບັດຄໍາຕັດສິນຂອງສານ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ ເຊັ່ນດຽວກັນ.

**ມາດຕາ 51 (ປັບປຸງ) ການປະຕິບັດຄໍາຕັດສິນຄະດີອາຍາ ກ່ຽວກັບໂທດປັບໃໝ**

ການປະຕິບັດຄໍາຕັດສິນຄະດີອາຍາ ກ່ຽວກັບໂທດປັບໃໝ ໃຫ້ປະຕິບັດຕາມ ໝວດທີ 3 ຫາ ໝວດທີ 5 ໃນພາກທີ II ຂອງກົດໝາຍສະບັບນີ້.

ສໍາລັບຜູ້ທີ່ຍັງປະຕິບັດໂທດຢູ່, ຜູ້ທີ່ໄດ້ຮັບການອະໄພຍະໂທດ ຫຼື ພົ້ນໂທດແລ້ວ ກໍຕ້ອງປະຕິບັດຄໍາຕັດສິນຂອງສານ ກ່ຽວກັບໂທດປັບໃໝ ເຊັ່ນດຽວກັນ.

**ມາດຕາ 52 (ປັບປຸງ) ການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດຣິບຊັບ ແລະ ຣິບວັດຖຸສິ່ງຂອງ**

ການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດຣິບຊັບ ແລະ ຣິບວັດຖຸສິ່ງຂອງ ໃຫ້ດຳເນີນຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນທີ່ກ່ຽວຂ້ອງນັ້ນທຸກປະການ ເຖິງວ່າຜູ້ຖືກຕັດສິນຍັງປະຕິບັດໂທດຢູ່, ໄດ້ຮັບການອະໄພຍະໂທດ ຫຼື ພົ້ນໂທດແລ້ວກໍຕາມ.

ຊັບ ຫຼື ວັດຖຸສິ່ງຂອງ ທີ່ສານຕັດສິນຣິບເປັນຂອງລັດນັ້ນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງສົ່ງບັນຊີ ຊັບ ຫຼື ວັດຖຸສິ່ງຂອງ ແລະ ຂໍ້ມູນທັງໝົດກ່ຽວກັບຊັບ ຫຼື ວັດຖຸສິ່ງຂອງນັ້ນ ໃຫ້ຂະແໜງການ ການເງິນ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຕັດສິນ ເປັນຕົ້ນໄປ ເພື່ອຂຶ້ນບັນຊີ ແລະ ຈົດທະບຽນເປັນຊັບສິນຂອງລັດ.

ສຳລັບ ຊັບ ຫຼື ວັດຖຸສິ່ງຂອງ ທີ່ສານຕັດສິນໃຫ້ຣິບແລ້ວທຳລາຍຖິ້ມນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ປະສານສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຄອບຄອງຊັບ ເພື່ອທຳລາຍຊັບ ຫຼື ວັດຖຸສິ່ງຂອງດັ່ງກ່າວ ຍົກເວັ້ນຊັບ ຫຼື ວັດຖຸສິ່ງຂອງບາງປະເພດ ເຊັ່ນ ຢາເສບຕິດ, ສານເຄມີ, ວັດຖຸລະເບີດ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 53 (ປັບປຸງ) ການປະຕິບັດໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ**

ການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ໃຫ້ປະຕິບັດຕໍ່ພະນັກງານ ຫຼື ບຸກຄົນ ທີ່ມີລາຍໄດ້ເທົ່ານັ້ນ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງຄຳຕັດສິນຂອງສານດັ່ງກ່າວ ໄປຍັງອົງການບ່ອນທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານສັງກັດຢູ່ ເພື່ອຫັກເອົາເງິນຄ່າແຮງງານ ແລ້ວມອບເຂົ້າງົບປະມານຂອງລັດ, ນອກຈາກນີ້ຜູ້ກ່ຽວຍັງຈະຕ້ອງໃຊ້ແທນຄ່າເສຍຫາຍທາງແພ່ງຕາມຄຳຕັດສິນຂອງສານອີກ.

**ມາດຕາ 54 (ໃໝ່) ການສົ່ງຊັບ ຫຼື ວັດຖຸສິ່ງຂອງຄືນ**

ໃນກໍລະນີ ສານໄດ້ຕັດສິນໃຫ້ສົ່ງ ຊັບ ຫຼື ວັດຖຸສິ່ງຂອງຄືນ ແກ່ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງແລ້ວ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຄອບຄອງຊັບ ຫຼື ວັດຖຸສິ່ງຂອງນັ້ນ ຕ້ອງມອບໃຫ້ອົງການປະຕິບັດຄຳຕັດສິນຂອງສານ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນ ໄດ້ຮັບແຈ້ງການເປັນຕົ້ນໄປ. ຖ້າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຄອບຄອງຊັບ ຫຼື ວັດຖຸສິ່ງຂອງນັ້ນ ຫາກບໍ່ຍອມສົ່ງຕາມກຳນົດເວລາ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ນຳໃຊ້ມາດຕະການຕາມແຕ່ລະກໍລະນີ.

ພາຍຫຼັງໄດ້ຮັບ ຊັບ ຫຼື ວັດຖຸສິ່ງຂອງແລ້ວ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງມອບໃຫ້ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ ຕາມຄຳຕັດສິນຂອງສານ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຊັບ ຫຼື ວັດຖຸສິ່ງຂອງ ເປັນຕົ້ນໄປ.

ໃນກໍລະນີ ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງຊັບ ຕາມຄຳຕັດສິນຂອງສານ ຫາກຍັງມີພັນທະປະຕິບັດຕາມຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງເອົາມາໄລ່ລຽງ, ຕີລາຄາ ຫຼື ຂາຍ ຕາມແຕ່ລະກໍລະນີ ເພື່ອປະຕິບັດພັນທະດັ່ງກ່າວ.

ຖ້າວ່າ ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ ບໍ່ມາຮັບເອົາຊັບ ຫຼື ວັດຖຸສິ່ງຂອງດັ່ງກ່າວ ພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບການແຈ້ງເປັນຕົ້ນໄປ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງໃຫ້ຂາຍຊັບ ຫຼື ວັດຖຸສິ່ງຂອງດັ່ງກ່າວ ແລ້ວນຳເງິນທີ່ຂາຍໄດ້ໄປຝາກໄວ້ຢູ່ທະນາຄານທຸລະກິດ ແລ້ວແຈ້ງໃຫ້ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງຊາບ. ໃນກໍລະນີ ເປັນເງິນ ຫາກເຈົ້າຂອງ ຫຼື ຜູ້ມີສິດຄອບຄອງບໍ່ມາຮັບເອົາ ພາຍໃນ

ກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບການແຈ້ງເປັນຕົ້ນໄປ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ນຳເງິນດັ່ງກ່າວໄປຝາກໄວ້ຢູ່ທະນາຄານທຸລະກິດ ແລ້ວແຈ້ງໃຫ້ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງຊາບ.

ຖ້າເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ ຫາກບໍ່ມາເອົາເງິນ ໂດຍບໍ່ມີເຫດຜົນ ພາຍໃນກຳນົດເວລາ ຫ້າປີ ນັບແຕ່ວັນໄດ້ຮັບການແຈ້ງເປັນຕົ້ນໄປ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ມອບເງິນຈຳນວນດັ່ງກ່າວ ພ້ອມດ້ວຍດອກເບ້ຍເຂົ້າງົບປະມານຂອງລັດ.

ໃນກໍລະນີ ຊັບ ຫຼື ວັດຖຸສິ່ງຂອງ ທີ່ໃຫ້ສົ່ງຄືນນັ້ນ ຫາກບໍ່ສາມາດນຳໃຊ້ໄດ້ ແລະ ບໍ່ມີມູນຄ່າ ໂດຍມີການຢັ້ງຢືນຈາກຄະນະກຳມະການທີ່ກ່ຽວຂ້ອງ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງທຳລາຍ.

**ມາດຕາ 55 ບຸລິມະສິດໃນການໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫຼື ຣິບວັດຖຸສິ່ງຂອງ**

ໃນການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫຼື ໂທດຣິບວັດຖຸສິ່ງຂອງນັ້ນ ຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກບໍ່ສາມາດໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫຼື ໂທດຣິບວັດຖຸສິ່ງຂອງ ພ້ອມກັນໄດ້ນັ້ນ ແມ່ນໃຫ້ປະຕິບັດການໃຊ້ແທນຄ່າເສຍຫາຍທາງແພ່ງກ່ອນ ແລ້ວຈຶ່ງປະຕິບັດໂທດປັບໃໝ, ໂທດຣິບຊັບ ຫຼື ໂທດຣິບວັດຖຸສິ່ງຂອງຕາມຫຼັງ.

**ມາດຕາ 56 (ປັບປຸງ) ການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດຕັດອິດສະລະພາບ**

ຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ໃນການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດຕັດອິດສະລະພາບ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ໃນກໍລະນີ ຄຳຕັດສິນສົ່ງໃຫ້ອົງການປະຕິບັດຄຳຕັດສິນຂອງສານແລ້ວ ແຕ່ຈຳເລີຍຍັງບໍ່ທັນໄດ້ປະຕິບັດໂທດຕັດອິດສະລະພາບຕາມຄຳຕັດສິນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ແຈ້ງໃຫ້ອົງການໄອຍະການປະຊາຊົນ ເພື່ອປະຕິບັດຕາມກົດໝາຍ.

## ພາກທີ IV
## ການໂຈະ, ການປ່ຽນແປງ, ການຍົກເລີກ ແລະ ການລຶບລ້າງ ການປະຕິບັດຄຳຕັດສິນຂອງສານ

**ມາດຕາ 57 (ປັບປຸງ) ການໂຈະການປະຕິບັດຄຳຕັດສິນຂອງສານ**

ການປະຕິບັດຄຳຕັດສິນຂອງສານ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເປັນຄົນບ້າເສຍຈິດ ຫຼື ຕົກຢູ່ໃນສະພາບຈຳເປັນ ເຊັ່ນ ເຈັບປ່ວຍໜັກ ໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;
2. ສະພາແຫ່ງຊາດ ສະເໜີໃຫ້ໂຈະຢ່າງເປັນລາຍລັກອັກສອນ ບົນພື້ນຖານການປະສານສົມທົບກັບອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ແລະ ໃນໄລຍະເວລາຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ;
3. ອົງການໄອຍະການປະຊາຊົນສູງສຸດ ສະເໜີໂຈະ ຢ່າງເປັນລາຍລັກອັກສອນ ໃນກໍລະນີ ມີການຮື້ຟື້ນຄະດີ ຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນກົດໝາຍ;
4. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ອອກຈາກສະຖານທີ່ຢູ່ອາໄສ ໂດຍບໍ່ຮູ້ບ່ອນຢູ່ທີ່ແນ່ນອນ ຊຶ່ງມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;
5. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເສຍຊີວິດ ແຕ່ຜູ້ກ່ຽວຍັງມີຜູ້ສືບທອດຢູ່;

6. ຄຳຕັດສິນຂອງສານ ທີ່ບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານ ໄດ້ສະເໜີໃຫ້ສານປະຊາຊົນ ມີຄຳເຫັນ;

7. ຄຳຕັດສິນຂອງສານ ບໍ່ຈະແຈ້ງ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານໄດ້ສະເໜີໃຫ້ສານປະຊາຊົນ ອະທິບາຍ;

8. ເຈົ້າໜີ້ ເຫັນດີໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໂຈະການປະຕິບັດຄຳຕັດສິນຂອງສານ;

9. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີຄວາມສາມາດຈ່າຍ ຄ່າທຳນຽມສານ, ຄ່າປັບໃໝ ຫຼື ເງິນຮິບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 60 ຂອງກົດໝາຍສະບັບນີ້;

10. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ພວມຖືກດຳເນີນຄະດີລົ້ມລະລາຍ.

ເມື່ອສາເຫດທີ່ພາໃຫ້ໂຈະການປະຕິບັດຄຳຕັດສິນຂອງສານ ຫາກໝົດໄປແລ້ວກໍໃຫ້ສືບຕໍ່ປະຕິບັດ.

**ມາດຕາ 58 (ປັບປຸງ) ການປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ການປະຕິບັດຄຳຕັນສິນຂອງສານ**

ການປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ການປະຕິບັດຄຳຕັດສິນຂອງສານ ມີສາເຫດ ດັ່ງນີ້:

1. ປະຕິບັດບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ;

2. ປະຕິບັດບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ລະເບີດລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີ ການປະຕິບັດຄຳຕັດສິນຂອງສານ ຫາກຖືກປ່ຽນແປງ, ຍົກເລີກ ຫຼື ລົບລ້າງແລ້ວ ສິ່ງທີ່ໄດ້ປະຕິບັດຕໍ່ກັນນັ້ນ ຕ້ອງໄດ້ສົ່ງຄືນ, ຟື້ນຟູ, ໃຊ້ແທນ ຫຼື ແກ້ໄຂຄືນ ໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງ ແລ້ວດຳເນີນການປະຕິບັດຄຳຕັດສິນຂອງສານຄືນໃໝ່ ຕາມແຕ່ລະກໍລະນີ.

**ມາດຕາ 59 (ປັບປຸງ) ວິທີການ ໂຈະ, ການປ່ຽນແປງ, ການຍົກເລີກ ຫຼື ລົບລ້າງ ການປະຕິບັດຄຳຕັດສິນຂອງສານ**

ເມື່ອກະຊວງຍຸຕິທຳ, ອົງການປະຕິບັດຄຳຕັດສິນຂອງສານ ໄດ້ຮັບຄຳຮ້ອງ, ຄຳສະເໜີ ໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ການປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ພິຈາລະນາ ແລະ ຄົ້ນຄວ້າ ພາຍໃນກຳນົດເວລາ ສາມສິບວັນ ຖ້າເຫັນວ່າມີເຫດຜົນ ຫຼື ມີສາເຫດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 57 ແລະ 58 ຂອງກົດໝາຍສະບັບນີ້ ກໍຕ້ອງອອກ ຄຳສັ່ງໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ການປະຕິບັດຄຳຕັດສິນຂອງສານ.

ພາຍຫຼັງອອກ ຄຳສັ່ງໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງແລ້ວ ຕ້ອງແຈ້ງໃຫ້ອົງການປະຕິບັດຄຳຕັດສິນຂອງສານຂັ້ນລຸ່ມຂອງຕົນ, ອົງການໄອຍະການປະຊາຊົນ ແລະ ຄູ່ຄວາມ ພາຍໃນກຳນົດເວລາ ສິບວັນ ນັບແຕ່ວັນອອກຄຳສັ່ງ ເປັນຕົ້ນໄປ.

ໃນກໍລະນີ ການຮ້ອງຂໍ ຫຼື ການສະເໜີ ໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ການປະຕິບັດຄຳຕັດສິນຂອງສານນັ້ນ ຫາກບໍ່ມີເຫດຜົນ ກະຊວງຍຸຕິທຳ, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງໃຫ້ອົງການປະຕິບັດຄຳຕັດສິນຂອງສານຂັ້ນລຸ່ມຂອງຕົນ, ອົງການໄອຍະການປະຊາຊົນ ແລະ ຄູ່ຄວາມ ພາຍໃນກຳນົດ ສາມສິບວັນ ເຊັ່ນດຽວກັນ ແລະ ໃຫ້ສືບຕໍ່ປະຕິບັດຄຳຕັດສິນດັ່ງກ່າວ.

ອົງການຈັດຕັ້ງຂອງພັກ, ຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ບຸກຄົນ ບໍ່ມີສິດສັ່ງໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ການປະຕິບັດຄຳຕັດສິນຂອງສານ.

# ພາກທີ V
# ການຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ການຣິບເງິນ

## ມາດຕາ 60 (ໃໝ່) ການຍົກເລີກການປະຕິບັດຄຳຕັດສິນຂອງສານ

ໃນກໍລະນີ ຜູ້ທີ່ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີຄວາມສາມາດຈ່າຍຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ຕາມຄຳຕັດສິນຂອງສານ ຫຼື ໄດ້ປະຕິບັດສ່ວນໃດສ່ວນໜຶ່ງແລ້ວ ແຕ່ບໍ່ສາມາດສືບຕໍ່ປະຕິບັດ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ສະເໜີອົງການໄອຍະການປະຊາຊົນຂັ້ນຂອງຕົນ ຕາມເງື່ອນໄຂ ເພື່ອຖະແຫຼງໃຫ້ສານປະຊາຊົນພິຈາລະນາຕັດສິນ.

ເງື່ອນໄຂການຍົກເລີກ ມີດັ່ງນີ້:

1. ຫ້າປີ ນັບຕັ້ງແຕ່ວັນທີ່ໄດ້ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຫຼື ວັນທີ່ຈ່າຍຄັ້ງສຸດທ້າຍເປັນຕົ້ນໄປ ສຳລັບ ຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ທີ່ມີມູນຄ່າບໍ່ເກີນ 5.000.000 ກີບ;

2. ສິບປີ ນັບຕັ້ງແຕ່ວັນທີ່ໄດ້ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຫຼື ວັນທີ່ຈ່າຍຄັ້ງສຸດທ້າຍເປັນຕົ້ນໄປ ສຳລັບ ຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ທີ່ມີມູນຄ່າແຕ່ 5.000.001 ກີບ ເຖິງ 100.000.000 ກີບ;

3. ສິບຫ້າປີ ນັບຕັ້ງແຕ່ວັນທີ່ໄດ້ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຫຼື ວັນທີ່ຈ່າຍຄັ້ງສຸດທ້າຍເປັນຕົ້ນໄປ ສຳລັບ ຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ທີ່ມີມູນຄ່າແຕ່ 100.000.001 ກີບ ຂຶ້ນໄປ.

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ປະຕິບັດຕາມຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ຫຼາຍຄຳຕັດສິນທີ່ຕ່າງກັນ, ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຈະຖືກພິຈາລະນາຍົກເລີກການປະຕິບັດຄຳຕັດສິນຂອງສານ ໃນແຕ່ລະຄະດີ.

## ມາດຕາ 61 (ໃໝ່) ການສະເໜີ ຍົກເລີກການປະຕິບັດຄຳຕັດສິນຂອງສານ

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ມີເງື່ອນໄຂຍົກເລີກການປະຕິບັດພັນທະ ຕາມທີ່ກຳນົດໄວ້ໃນ ມາດຕາ 60 ຂອງກົດໝາຍສະບັບນີ້ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງປະກອບເອກະສານສະເໜີຍົກເລີກ ຕໍ່ອົງການໄອຍະການປະຊາຊົນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນຄົບເງື່ອນໄຂເປັນຕົ້ນໄປ.

ເອກະສານປະກອບ ສະເໜີຍົກເລີກການປະຕິບັດຄຳຕັດສິນຂອງສານ ມີດັ່ງນີ້:

1. ໜັງສືສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ ທີ່ຮັບຜິດຊອບປະຕິບັດຄຳຕັດສິນຂອງສານ;

2. ຄຳຕັດສິນຂອງສານ, ຄຳສັ່ງຕ່າງໆຂອງອົງການປະຕິບັດຄຳຕັດສິນຂອງສານ;

3. ບົດບັນທຶກການປະຕິບັດຄຳຕັດສິນຂອງສານ, ເອກະສານອື່ນ ທີ່ອ້າງອີງເຖິງເງື່ອນໄຂບໍ່ສາມາດປະຕິບັດຄຳຕັດສິນຂອງສານ ຊຶ່ງມີໄລຍະເວລາບໍ່ເກີນ ສາມເດືອນ.

**ມາດຕາ 62 (ໃໝ່) ຄຳຖະແຫຼງ ຍົກເລີກການປະຕິບັດຄຳຕັດສິນຂອງສານ**

ພາຍຫຼັງໄດ້ຮັບ ເອກະສານສະເໜີຍົກເລີກແລ້ວ ອົງການໄອຍະການປະຊາຊົນ ຕ້ອງຄົ້ນຄວ້າ ແລະ ອອກຄຳຖະແຫຼງ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ ແລ້ວສົ່ງສຳນວນ ເອກະສານໃຫ້ສານປະຊາຊົນ ເພື່ອພິຈາລະນາຕັດສິນ.

ໃນກໍລະນີ ອົງການໄອຍະການປະຊາຊົນ ບໍ່ເຫັນດີຕໍ່ການສະເໜີຍົກເລີກການປະຕິບັດຄຳຕັດສິນຂອງ ສານ ກໍໃຫ້ແຈ້ງເປັນລາຍລັກອັກສອນພ້ອມດ້ວຍເຫດຜົນ ຕໍ່ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ພາຍໃນກຳນົດເວລາທີ່ກ່າວມາຂ້າງເທິງນີ້.

ຖ້າອົງການປະຕິບັດຄຳຕັດສິນຂອງສານ ເຫັນວ່າການປະຕິເສດອອກຄຳຖະແຫຼງ ຂອງອົງການໄອຍະ ການປະຊາຊົນບໍ່ມີເຫດຜົນ ກໍສາມາດສະເໜີຕໍ່ອົງການໄອຍະການປະຊາຊົນຂັ້ນເທິງຖັດໄປ.

**ມາດຕາ 63 (ໃໝ່) ການຕັດສິນຍົກເລີກການປະຕິບັດຄຳຕັດສິນຂອງສານ**

ພາຍຫຼັງໄດ້ຮັບ ຄຳຖະແຫຼງ ແລະ ສຳນວນເອກະສານ ການຍົກເລີກການປະຕິບັດຄຳຕັດສິນຂອງສານ ແລ້ວ ສານປະຊາຊົນ ຕ້ອງພິຈາລະນາຕັດສິນ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນໄດ້ຮັບສຳນວນ ເປັນຕົ້ນ ໄປ.

ຜູ້ເຂົ້າຮ່ວມ ໃນການດຳເນີນຄະດີ ມີດັ່ງນີ້:

1. ຜູ້ຕາງໜ້າຂອງອົງການປະຕິບັດຄຳຕັດສິນຂອງສານ;
2. ຜູ້ຕາງໜ້າຂອງອົງການໄອຍະການປະຊາຊົນ;
3. ຜູ້ຕາງໜ້າຂອງຂະແໜງການການເງິນ.

ສານປະຊາຊົນ ຕ້ອງສົ່ງຄຳຕັດສິນກ່ຽວກັບ ການຍົກເລີກການປະຕິບັດຄຳຕັດສິນຂອງສານ ໃຫ້ ອົງການປະຕິບັດຄຳຕັດສິນຂອງສານ, ອົງການໄອຍະການປະຊາຊົນ, ຂະແໜງການການເງິນ, ຜູ້ຖືກຍົກເລີກ ແລະ ການຈັດຕັ້ງບ່ອນທີ່ຜູ້ກ່ຽວ ຖືກຄຸມຂັງ-ດັດສ້າງ ຫຼື ສັງກັດຢູ່ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນ ລົງຄຳຕັດສິນ ເປັນຕົ້ນໄປ.

ພາຍຫຼັງ ຄຳຕັດສິນ ມີຜົນບັງຄັບປະຕິບັດແລ້ວ ແຕ່ມີຂໍ້ມູນຢັ້ງຢືນວ່າ ຜູ້ຖືກປະຕິບັດຄຳຕັດສິນ ໄດ້ ຊຸກເຊື່ອງ, ເຊື່ອງອຳ, ມອບ, ໂອນ ຊັບສິນ ເພື່ອຫຼົບຫຼີກການປະຕິບັດ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ສະເໜີຂໍຮື້ຟື້ນຕໍ່ອົງການໄອຍະການປະຊາຊົນສູງສຸດ ເພື່ອພິຈາລະນາ ແລະ ດຳເນີນຄະດີຕາມກົດໝາຍ.

## ພາກທີ VI
## ອົງການປະຕິບັດຄຳຕັດສິນຂອງສານ

**ມາດຕາ 64 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການປະຕິບັດຄຳຕັດສິນຂອງສານ**

ອົງການປະຕິບັດຄຳຕັດສິນຂອງສານ ແມ່ນ ການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງຍຸຕິທຳ, ມີພາລະ ບົດບາດປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງກົດໝາຍສະບັບນີ້.

**ມາດຕາ 65 (ໃໝ່) ໂຄງປະກອບການຈັດຕັ້ງ**

ອົງການປະຕິບັດຄຳຕັດສິນຂອງສານ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;
2. ກອງປະຕິບັດຄຳຕັດສິນຂອງສານ ປະຈຳແຂວງ, ນະຄອນຫຼວງ;

3. ໜ່ວຍປະຕິບັດຄຳຕັດສິນຂອງສານ ປະຈຳເມືອງ, ເທດສະບານ, ນະຄອນ.

**ມາດຕາ 66 (ໃໝ່) ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ**

ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ, ຄຸ້ມຄອງ ແລະ ກວດກາດ້ານວິຊາການ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ;
2. ປະຕິບັດຄຳຕັດສິນຂອງສານ ທີ່ມີຄວາມຫຍຸ້ງຍາກ, ພົວພັນກັບຫຼາຍແຂວງ ບົນພື້ນຖານການສະເໜີຢ່າງມີເຫດຜົນ ຂອງກອງປະຕິບັດຄຳຕັດສິນຂອງສານ;
3. ມອບຄະດີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ເພື່ອປະຕິບັດ ຫຼື ຖອນຄະດີຄືນຈາກພະນັກງານປະຕິບັດຄຳຕັດສິນຂອງສານ;
4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ໝາຍຮຽກ ແລະ ແຈ້ງການ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
5. ທວງເອົາຂອງກາງຄະດີ ທີ່ຍັງບໍ່ທັນໄດ້ຮັບຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳມາປະຕິບັດ;
6. ສະເໜີໃຫ້ສານປະຊາຊົນ ທີ່ໄດ້ອອກຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍ ຫຼື ມີຄຳເຫັນ ຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ ຫຼື ບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;
7. ສະເໜີຕໍ່ອົງການໄອຍະການປະຊາຊົນ ຫຼື ເຈົ້າໜ້າທີ່ຕຳຫຼວດ ນຳໃຊ້ມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາບໍ່ປະຕິບັດ ຫຼື ຫຼົບຫຼີກການປະຕິບັດຄຳຕັດສິນຂອງສານ;
8. ສະເໜີລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາສະເໜີ ອົງການໄອຍະການປະຊາຊົນສູງສຸດ ເພື່ອຮື້ຟື້ນຄະດີກ່ຽວກັບຄຳຕັດສິນທີ່ບໍ່ສອດຄ່ອງກັບຄວາມເປັນຈິງ;
9. ຮັບ ແລະ ແກ້ໄຂຄຳຮ້ອງ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
10. ສະເໜີລັດຖະມົນຕີກະຊວງຍຸຕິທຳ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ສັບຊ້ອນ ຫຼື ລົງວິໄນ ບຸກຄະລາກອນ;
11. ສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຕາມທີ່ກຳນົດໄວ້ໃນ ມາດຕາ 57 ກົດໝາຍສະບັບນີ້;
12. ປ່ຽນແປງ, ຍົກເລີກ ຫຼື ລຶບລ້າງ ນິຕິກຳຂອງກອງປະຕິບັດຄຳຕັດສິນຂອງສານ ແຂວງ, ນະຄອນຫຼວງ ທີ່ບໍ່ຖືກຕ້ອງຕາມຄຳຕັດສິນ ຫຼື ຕາມກົດໝາຍ;
13. ຄຸ້ມຄອງ, ນຳໃຊ້ ລະບົບຖານຂໍ້ມູນສະຖິຕິຄຳຕັດສິນຂອງສານ, ເຕັກໂນໂລຊີ ເຂົ້າໃນການປະຕິບັດຄຳຕັດສິນຂອງສານ;
14. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
15. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມການມອບໝາຍ ຂອງກະຊວງຍຸຕິທຳ;
16. ສະຫຼຸບ ແລະ ລາຍງານ ການປະຕິບັດຄຳຕັດສິນຂອງສານ ໃຫ້ກະຊວງຍຸຕິທຳ ຢ່າງເປັນປົກກະຕິ;
17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 67 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຕິບັດຄຳຕັດສິນຂອງສານ ແຂວງ, ນະຄອນຫຼວງ**

ກອງປະຕິບັດຄຳຕັດສິນຂອງສານ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະຕິບັດຄຳຕັດສິນຂອງສານ ທີ່ສານປະຊາຊົນຂັ້ນແຂວງ, ນະຄອນຫຼວງ ຕັດສິນເປັນຂັ້ນຕົ້ນ;
2. ປະຕິບັດຄຳຕັດສິນຂອງສານ ທີ່ມີຄວາມຫຍຸ້ງຍາກ, ພົວພັນກັບຫຼາຍເມືອງ ບົນພື້ນຖານການສະເໜີຢ່າງມີເຫດຜົນ ຂອງໜ່ວຍປະຕິບັດຄຳຕັດສິນຂອງສານ ເມືອງ, ເທດສະບານ, ນະຄອນ;
3. ມອບຄະດີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ເພື່ອປະຕິບັດ ຫຼື ຖອນຄະດີຄືນຈາກພະນັກງານປະຕິບັດຄຳຕັດສິນຂອງສານ;
4. ຊີ້ນຳທາງດ້ານວິຊາການ ແລະ ກວດກາການປະຕິບັດໜ້າທີ່ ຂອງໜ່ວຍປະຕິບັດຄຳຕັດສິນຂອງສານ ເມືອງ, ເທດສະບານ, ນະຄອນ;
5. ທວງເອົາຂອງກາງຄະດີ ທີ່ຍັງບໍ່ທັນໄດ້ຮັບຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳມາປະຕິບັດ;
6. ສະເໜີໃຫ້ສານປະຊາຊົນ ທີ່ໄດ້ອອກຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍ ຫຼື ມີຄຳເຫັນ ຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ ຫຼື ທີ່ບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;
7. ສະເໜີຕໍ່ອົງການໄອຍະການປະຊາຊົນ ຫຼື ເຈົ້າໜ້າທີ່ຕຳຫຼວດ ນຳໃຊ້ມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາບໍ່ປະຕິບັດ ຫຼື ຫຼົບຫຼີກການປະຕິບັດຄຳຕັດສິນຂອງສານ;
8. ອອກໝາຍຮຽກ, ຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງພາຕົວ, ຄຳສັ່ງປັບໃໝ, ຄຳສັ່ງປິດສຳນວນຄະດີ ແລະ ຄຳສັ່ງອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
9. ສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຕາມທີ່ກຳນົດໄວ້ໃນ ຂໍ້ 1, 4, 5, 7, 8, 9 ແລະ 10 ມາດຕາ 57 ຂອງກົດໝາຍສະບັບນີ້;
10. ປ່ຽນແປງ, ຍົກເລີກ ຫຼື ລຶບລ້າງນິຕິກຳ ຂອງໜ່ວຍປະຕິບັດຄຳຕັດສິນຂອງສານ ເມືອງ, ເທດສະບານ, ນະຄອນ ທີ່ບໍ່ຖືກຕ້ອງຕາມຄຳຕັດສິນ ຫຼື ຕາມກົດໝາຍ;
11. ຮັບ ແລະ ແກ້ໄຂຄຳຮ້ອງ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
12. ຄຸ້ມຄອງ, ນຳໃຊ້ ລະບົບຖານຂໍ້ມູນສະຖິຕິຄຳຕັດສິນຂອງສານ, ເຕັກໂນໂລຊີ ເຂົ້າໃນການປະຕິບັດຄຳຕັດສິນຂອງສານ;
13. ປະສານສົມທົບກັບ ພະແນກການ ແລະ ພາກສ່ວນອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
14. ລາຍງານ ການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການໄອຍະການປະຊາຊົນຂັ້ນຂອງຕົນ ຢ່າງເປັນປົກກະຕິ ຫຼື ຕາມການສະເໜີ;
15. ສະຫຼຸບ ແລະ ລາຍງານ ການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປົກຄອງຂັ້ນແຂວງ ແລະ ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຢ່າງເປັນປົກກະຕິ;
16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 68 (ປັບປຸງ) ສິດ ແລະ ໜ້າທີ່ ຂອງໜ່ວຍປະຕິບັດຄຳຕັດສິນຂອງສານ ເມືອງ, ເທດສະບານ ນະຄອນ**

ໜ່ວຍປະຕິບັດຄຳຕັດສິນຂອງສານ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະຕິບັດຄຳຕັດສິນ ແລະ ນິຕິກຳອື່ນ ທີ່ສານປະຊາຊົນເຂດ ຕັດສິນເປັນຂັ້ນຕົ້ນ;

2. ມອບຄະດີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ເພື່ອປະຕິບັດ ຫຼື ຖອນຄະດີຄືນຈາກພະນັກງານປະຕິບັດຄຳຕັດສິນຂອງສານ;

3. ທວງເອົາຂອງກາງຄະດີ ທີ່ຍັງບໍ່ທັນໄດ້ຮັບຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳມາປະຕິບັດ;

4. ສະເໜີໃຫ້ສານປະຊາຊົນ ທີ່ໄດ້ອອກຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍ ຫຼື ມີຄຳເຫັນ ຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ ຫຼື ທີ່ບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;

5. ສະເໜີຕໍ່ອົງການໄອຍະການປະຊາຊົນ ຫຼື ເຈົ້າໜ້າທີ່ຕຳຫຼວດ ນຳໃຊ້ມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາບໍ່ປະຕິບັດ ຫຼື ຫຼົບຫຼີກການປະຕິບັດຄຳຕັດສິນຂອງສານ;

6. ອອກໝາຍຮຽກ, ຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງພາຕົວ, ຄຳສັ່ງປັບໃໝ, ຄຳສັ່ງປິດສຳນວນຄະດີ ແລະ ຄຳສັ່ງອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

7. ສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຕາມທີ່ກຳນົດໄວ້ໃນ ຂໍ້ 1, 4, 5, 7, 8, 9 ແລະ 10 ມາດຕາ 57 ຂອງກົດໝາຍສະບັບນີ້;

8. ປະສານສົມທົບກັບ ຫ້ອງການ ແລະ ພາກສ່ວນອື່ນກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

9. ຄຸ້ມຄອງ, ນຳໃຊ້ ລະບົບຖານຂໍ້ມູນສະຖິຕິຄຳຕັດສິນຂອງສານ, ເຕັກໂນໂລຊີ ເຂົ້າໃນການປະຕິບັດຄຳຕັດສິນຂອງສານ;

10. ລາຍງານ ການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການໄອຍະການປະຊາຊົນຂັ້ນຂອງຕົນຢ່າງເປັນປົກກະຕິ ຫຼື ຕາມການສະເໜີ;

11. ສະຫຼຸບ, ລາຍງານ ການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປົກຄອງຂັ້ນເມືອງ ແລະ ກອງປະຕິບັດຄຳຕັດສິນຂອງສານ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 69 (ປັບປຸງ) ໂຄງປະກອບບຸກຄະລາກອນ**

ອົງການປະຕິບັດຄຳຕັດສິນຂອງສານ ມີ ໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ
- ຫົວໜ້າກົມ, ຮອງຫົວໜ້າກົມ;
- ຫົວໜ້າພະແນກ, ຮອງຫົວໜ້າພະແນກ;
- ພະນັກງານປະຕິບັດຄຳຕັດສິນຂອງສານ;
- ວິຊາການ ແລະ ພະນັກງານບໍລິຫານ ຈຳນວນໜຶ່ງ.

2. ກອງປະຕິບັດຄຳຕັດສິນຂອງສານ ປະຈຳແຂວງ, ນະຄອນຫຼວງ
- ຫົວໜ້າ, ຮອງຫົວໜ້າກອງ;
- ຫົວໜ້າ, ຮອງຫົວໜ້າຫ້ອງ;
- ພະນັກງານປະຕິບັດຄຳຕັດສິນຂອງສານ;
- ວິຊາການ ແລະ ພະນັກງານບໍລິຫານ ຈຳນວນໜຶ່ງ.

3. ໜ່ວຍປະຕິບັດຄຳຕັດສິນຂອງສານ ປະຈຳເມືອງ, ເທດສະບານ, ນະຄອນ
- ຫົວໜ້າ, ຮອງຫົວໜ້າໜ່ວຍ;

- ຫົວໜ້າ, ຮອງຫົວໜ້າຈຸ;
- ພະນັກງານປະຕິບັດຄຳຕັດສິນຂອງສານ;
- ວິຊາການ ແລະ ພະນັກງານບໍລິຫານ ຈຳນວນໜຶ່ງ.

### ມາດຕາ 70 (ໃໝ່) ຫົວໜ້າ, ຮອງຫົວໜ້າ ອົງການປະຕິບັດຄຳຕັດສິນຂອງສານ

ຫົວໜ້າ, ຮອງຫົວໜ້າກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງຍຸຕິທຳ.

ຜູ້ທີ່ຈະເປັນ ຫົວໜ້າ, ຮອງຫົວໜ້າກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຫົວໜ້າກອງປະຕິບັດຄຳຕັດສິນຂອງສານ ປະຈຳແຂວງ, ນະຄອນຫຼວງ ຕ້ອງເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສາມ ຢ່າງໜ້ອຍ ສາມປີ;
2. ຮອງຫົວໜ້າກອງປະຕິບັດຄຳຕັດສິນຂອງສານ ປະຈຳແຂວງ, ນະຄອນຫຼວງ ຕ້ອງເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ ຢ່າງໜ້ອຍ ສາມປີ;
3. ຫົວໜ້າໜ່ວຍປະຕິບັດຄຳຕັດສິນຂອງສານ ປະຈຳເມືອງ, ເທດສະບານ, ນະຄອນ ຕ້ອງເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ ຢ່າງໜ້ອຍ ສາມປີ;
4. ຮອງຫົວໜ້າໜ່ວຍປະຕິບັດຄຳຕັດສິນຂອງສານ ປະຈຳເມືອງ, ເທດສະບານ, ນະຄອນ ຕ້ອງເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ ຢ່າງໜ້ອຍ ໜຶ່ງປີ.

ສຳລັບມາດຕະຖານ, ເງື່ອນໄຂຂອງຫົວໜ້າ, ຮອງຫົວໜ້າກົມ ແລະ ຕຳແໜ່ງບໍລິຫານ ຂອງບຸກຄາລະກອນ ຂອງອົງການປະຕິບັດຄຳຕັດສິນຂອງສານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 71 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫົວໜ້າ, ຮອງຫົວໜ້າ ອົງການປະຕິບັດຄຳຕັດສິນຂອງສານ

ຫົວໜ້າກົມ, ກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ ມີສິດ ແລະ ໜ້າທີ່ ໃນການຊີ້ນຳ, ນຳພາ ແລະ ກວດກາ ການເຄື່ອນໄຫວວຽກງານຂອງອົງການຕົນ ພ້ອມກັນນັ້ນ ກໍມີໜ້າທີ່ຮັບຜິດຊອບຕໍ່ ກະຊວງຍຸຕິທຳ, ອົງການປົກຄອງຂັ້ນແຂວງ ຫຼື ອົງການປົກຄອງຂັ້ນເມືອງ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 67 ແລະ 68 ຂອງກົດໝາຍສະບັບນີ້.

ຮອງຫົວໜ້າກົມ, ກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ ເປັນຜູ້ຊ່ວຍວຽກຫົວໜ້າ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ. ໃນກໍລະນີ ຫົວໜ້າຕິດຂັດ ຍ້ອນເຫດຜົນໃດໜຶ່ງ ຮອງຫົວໜ້າຜູ້ທີ່ໄດ້ຮັບມອບໝາຍນັ້ນ ເປັນຜູ້ວ່າການແທນ.

### ມາດຕາ 72 (ໃໝ່) ພະນັກງານປະຕິບັດຄຳຕັດສິນຂອງສານ

ພະນັກງານປະຕິບັດຄຳຕັດສິນຂອງສານ ແມ່ນຜູ້ປະຕິບັດຄຳຕັດສິນຂອງສານ ທີ່ມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 73 ຂອງກົດໝາຍສະບັບນີ້ ແລະ ຖືກແຕ່ງຕັ້ງໂດຍລັດຖະມົນຕີກະຊວງຍຸຕິທຳ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຈັດແບ່ງຕາມຂັ້ນ ດັ່ງນີ້:

1. ພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນໜຶ່ງ;
2. ພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ;

3. ພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສາມ.

**ມາດຕາ 73 (ປັບປຸງ) ມາດຕະຖານ ແລະ ເງື່ອນໄຂ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ**

ພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນໜຶ່ງ ມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ 25 ປີ ຂຶ້ນໄປ;
2. ມີທັດສະນະຫຼັກໝັ້ນຊຶນຊັ້ນ ແລະ ມີຄວາມໜັກແໜ້ນທາງດ້ານການເມືອງ;
3. ມີຄຸນສົມບັດ ຈັນຍາບັນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີຄວາມສັດຊື່ບໍລິສຸດຕໍ່ປະເທດຊາດ, ຕໍ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງພົນລະເມືອງ, ມີມະນຸດສຳພັນດີ;
4. ມີລະດັບການສຶກສາກົດໝາຍ ຂັ້ນສູງຂຶ້ນໄປ ແລະ ໄດ້ຜ່ານການຝຶກອົບຮົມວຽກງານປະຕິບັດຄຳຕັດສິນຂອງສານ;
5. ມີປະສົບການເຮັດວຽກກ່ຽວກັບກົດໝາຍ ຢ່າງໜ້ອຍ ສາມປີ;
6. ໄດ້ຜ່ານການສອບເສັງ ເຂົ້າເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນໜຶ່ງ;
7. ມີສຸຂະພາບດີ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ ມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນໜຶ່ງ ຢ່າງໜ້ອຍ 5 ປີ;
2. ໄດ້ຜ່ານການສອບເສັງ ເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສາມ ມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສອງ ຢ່າງໜ້ອຍ 5 ປີ;
2. ໄດ້ຜ່ານການສອບເສັງເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຂັ້ນສາມ.

**ມາດຕາ 74 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ**

ພະນັກງານປະຕິບັດຄຳຕັດສິນຂອງສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ເພື່ອຂຶ້ນແຜນ ແລະ ກະກຽມເງື່ອນໄຂຕ່າງໆໃນການປະຕິບັດ;
2. ສະເໜີ ຫົວໜ້າກົມ, ກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ ເພື່ອນຳສະເໜີຕໍ່ສານປະຊາຊົນ ທີ່ໄດ້ລົງຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍ ຫຼື ມີຄຳເຫັນ ຢ່າງເປັນລາຍລັກອັກສອນກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ ຫຼື ບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;
3. ແຈ້ງເນື້ອໃນຄຳຕັດສິນຂອງສານ ໃຫ້ຄູ່ຄວາມຊາບ ພ້ອມທັງແນະນຳ, ສຶກສາອົບຮົມ ແລະ ຊຸກຍູ້ໃຫ້ປະຕິບັດ;
4. ເກັບກຳຂໍ້ມູນ ກ່ຽວກັບຊັບສິນ ແລະ ເງື່ອນໄຂຕ່າງໆ ຂອງຜູ້ຖືກປະຕິບັດຄຳຕັດສິນ ເພື່ອປະຕິບັດຄຳຕັດສິນຂອງສານ;
5. ນຳໃຊ້ ລະບົບຖານຂໍ້ມູນສະຖິຕິຄຳຕັດສິນຂອງສານ, ເຕັກໂນໂລຊີ ເຂົ້າໃນການປະຕິບັດຄຳຕັດສິນຂອງສານ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດຄຳຕັດສິນຂອງສານ;
7. ສະເໜີໃຫ້ຫົວໜ້າກົມ, ກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງພາຕົວ, ຄຳສັ່ງປັບໃໝ ຫຼື ມາດຕະການອື່ນ;

8. ສະຫຼຸບ ແລະ ລາຍງານ ການປະຕິບັດຄຳຕັດສິນຂອງສານ ທີ່ຕົນຮັບຜິດຊອບຕໍ່ຫົວໜ້າກົມ, ກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ຄວາມຮັບຜິດຊອບຕໍ່ການປະຕິບັດຄຳຕັດສິນຂອງສານ

### ມາດຕາ 75 (ປັບປຸງ) ຄວາມຮັບຜິດຊອບ ຂອງສະພາແຫ່ງຊາດ

ໃນການປະຕິບັດຄຳຕັດສິນຂອງສານ ສະພາແຫ່ງຊາດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ;
2. ຄົ້ນຄວ້າ ຄຳຮ້ອງຂໍຄວາມເປັນທຳ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
3. ສະເໜີໂຈະການປະຕິບັດຄຳຕັດສິນຂອງສານ ຢ່າງເປັນລາຍລັກອັກສອນ ບົນພື້ນຖານການປະສານສົມທົບກັບ ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ແລະ ໃນໄລຍະເວລາຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ;
4. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

### ມາດຕາ 76 (ໃໝ່) ຄວາມຮັບຜິດຊອບ ຂອງລັດຖະບານ

ໃນການປະຕິບັດຄຳຕັດສິນຂອງສານ ລັດຖະບານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ພິຈາລະນາອອກນະໂຍບາຍ, ນິຕິກຳ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຊີ້ນຳ-ນຳພາ ບັນດາອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ ໃຫ້ມີສ່ວນຮ່ວມ ແລະ ຮ່ວມມື ໃນການປະຕິບັດຄຳຕັດສິນຂອງສານ;
4. ປະສານສົມທົບກັບ ອົງການນິຕິບັນຍັດ ແລະ ອົງການຕຸລາການ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
5. ສະຫຼຸບ ແລະ ລາຍງານ ຕໍ່ສະພາແຫ່ງຊາດ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
6. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

### ມາດຕາ 77 (ໃໝ່) ຄວາມຮັບຜິດຊອບ ຂອງສານປະຊາຊົນ

ໃນການປະຕິບັດຄຳຕັດສິນຂອງສານ ສານປະຊາຊົນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຮັບປະກັນການອອກຄຳຕັດສິນ ໃຫ້ມີເນື້ອໃນຊັດເຈນ ແລະ ສາມາດປະຕິບັດໄດ້;
2. ອະທິບາຍ ຄຳຕັດສິນທີ່ບໍ່ຈະແຈ້ງ ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນໄດ້ຮັບການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນໄປ;

3. ມີຄຳເຫັນຕໍ່ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ທີ່ບໍ່ກົງກັບຕົວຈິງເຮັດໃຫ້ບໍ່ສາມາດປະຕິບັດໄດ້ ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນໄດ້ຮັບການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນໄປ;

4. ພິຈາລະນາຕັດສິນຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ການຮິບເງິນ;

5. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 78 (ປັບປຸງ) ຄວາມຮັບຜິດຊອບ ຂອງອົງການໄອຍະການປະຊາຊົນ**

ໃນການປະຕິບັດຄຳຕັດສິນຂອງສານ ອົງການໄອຍະການປະຊາຊົນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະສານສົມທົບກັບກະຊວງຍຸຕິທຳ ເພື່ອອອກນິຕິກຳທີ່ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຄົ້ນຄວ້າອອກຄຳຖະແຫຼງຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ການຮິບເງິນ;

3. ສັ່ງຟ້ອງ ຜູ້ຂັດຂວາງ, ຜູ້ບໍ່ຍິນຍອມປະຕິບັດຕາມຄຳຕັດສິນຂອງສານ;

4. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 79 (ໃໝ່) ຄວາມຮັບຜິດຊອບ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ໃນການປະຕິບັດຄຳຕັດສິນຂອງສານ ຂະແໜງການປ້ອງກັນຄວາມສະຫງົບ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະສານສົມທົບກັບກະຊວງຍຸຕິທຳ ເພື່ອອອກນິຕິກຳໃຕ້ກົດໝາຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ໂຄສະນາເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ໃຫ້ເຈົ້າໜ້າທີ່ຕຳຫຼວດ ແລະ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ພວມປະຕິບັດໂທດຢູ່ຄ້າຍຄຸມຂັງ-ດັດສ້າງ ລວມທັງ ຜົວ ຫຼື ເມຍ, ລູກ, ພໍ່, ແມ່ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເພື່ອເຂົ້າຮ່ວມ ແລະ ໃຫ້ການຮ່ວມມື ໃນການປະຕິບັດຄຳຕັດສິນຂອງສານ;

3. ເປັນເຈົ້າການປະຕິບັດ ມາດຕະການທາງດ້ານກົດໝາຍ ໃນການປະຕິບັດຄຳຕັດສິນຂອງສານ;

4. ປະສານສົມທົບກັບອົງການປະຕິບັດຄຳຕັດສິນຂອງສານ ໃນການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ. ໃນກໍລະນີ ມີການສະເໜີອະໄພຍະໂທດ, ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ ແລະ ກໍລະນີອື່ນ ຕາມກົດໝາຍ;

5. ສະໜອງຂໍ້ມູນກ່ຽວກັບການປະຕິບັດໂທດ, ການໃຊ້ແທນຄ່າເສຍຫາຍທາງແພ່ງ, ໂທດປັບໃໝ ຂອງຜູ້ຖືກປະຕິບັດຄຳຕັດສິນ ທີ່ພວມປະຕິບັດໂທດ ຢູ່ຄ້າຍຄຸມຂັງ-ດັດສ້າງ, ທີ່ຢູ່ອາໄສ ຂອງຜູ້ຖືກປະຕິບັດຄຳຕັດສິນ ທີ່ໄດ້ຮັບການປ່ອຍຕົວແລ້ວ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

6. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

7. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 80 (ໃໝ່) ຄວາມຮັບຜິດຊອບ ຂອງຂະແໜງການການເງິນ**

ໃນການປະຕິບັດຄຳຕັດສິນຂອງສານ ຂະແໜງການການເງິນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບແຫຼ່ງລາຍຮັບຈາກງົບປະມານຂອງລັດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

2. ປະຕິບັດຕາມ ຄຳສັ່ງ, ໜັງສືສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

3. ເຂົ້າຮ່ວມການພິຈາລະນາຕັດສິນຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ການຮິບເງິນ;

4. ຂຶ້ນບັນຊີ, ຕິດຕາມ ຫຼື ທວງຊັບສິນ ທີ່ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ຕາມການແຈ້ງຂອງອົງການປະຕິບັດຄຳຕັດສິນຂອງສານ;

5. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 81 (ໃໝ່) ຄວາມຮັບຜິດຊອບ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ໃນການປະຕິບັດຄຳຕັດສິນຂອງສານ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບທີ່ດິນ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

2. ດຳເນີນການຈົດທະບຽນ ຊັບສິນ, ສິດນຳໃຊ້ທີ່ດິນ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

3. ອອກ, ຖອນ, ຍົກເລີກ ຫຼື ລົບລ້າງ ເອກະສານຢັ້ງຢືນກຳມະສິດ, ສິດນຳໃຊ້ທີ່ດິນ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

4. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 82 (ໃໝ່) ຄວາມຮັບຜິດຊອບ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ**

ໃນການປະຕິບັດຄຳຕັດສິນຂອງສານ ຂະແໜງການໂຍທາທິການ ແລະ ຂົນສົ່ງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບສິ່ງປຸກສ້າງ, ສິ່ງກໍ່ສ້າງ, ຍານພາຫະນະ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

2. ດຳເນີນການຕີລາຄາສິ່ງປຸກສ້າງ, ສິ່ງກໍ່ສ້າງ; ຈົດທະບຽນ ຍານພາຫະນະ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

3. ອອກ, ຖອນ, ຍົກເລີກ ຫຼື ລົບລ້າງ ເອກະສານຢັ້ງຢືນກຳມະສິດຍານພາຫະນະ, ໃບອານຸຍາດປຸກສ້າງ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;

4. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 83 (ໃໝ່) ຄວາມຮັບຜິດຊອບ ຂອງທະນາຄານ ແຫ່ງ ສປປ ລາວ**

ໃນການປະຕິບັດຄຳຕັດສິນຂອງສານ ທະນາຄານ ແຫ່ງ ສປປ ລາວ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຊີ້ນຳທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ໃຫ້ສະໜອງຂໍ້ມູນ ກ່ຽວກັບບັນຊີຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;
2. ຊີ້ນຳທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ໃຫ້ປະຕິບັດຕາມ ຄຳສັ່ງ, ໜັງສືສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;
3. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;
4. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 84 (ໃໝ່) ຄວາມຮັບຜິດຊອບ ຂອງອົງການປົກຄອງທ້ອງຖິ່ນ**

ໃນການປະຕິບັດຄຳຕັດສິນຂອງສານ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊຸກຍູ້ການປະຕິບັດຄຳຕັດສິນຂອງສານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
2. ຊີ້ນຳບັນດາພະແນກການ, ຫ້ອງການ ແລະ ການຈັດຕັ້ງໃນທ້ອງຖິ່ນຕົນ ໃຫ້ເຂົ້າຮ່ວມ ແລະ ຮ່ວມມື ໃນການປະຕິບັດຄຳຕັດສິນຂອງສານ;
3. ມີຄຳເຫັນຕໍ່ການປະຕິບັດຄຳຕັດສິນຂອງສານ ທີ່ມີຄວາມຫຍຸ້ງຍາກ, ມີຜົນສະທ້ອນຕໍ່ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ໃນທ້ອງຖິ່ນຂອງຕົນ ຕາມການສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ;
4. ມີຄຳເຫັນເປັນລາຍລັກອັກສອນ ກ່ຽວກັບການສະເໜີແຕ່ງຕັ້ງ, ໂຍກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າກອງ ແລະ ໜ່ວຍປະຕິບັດຄຳຕັດສິນຂອງສານ;
5. ແຈ້ງໃຫ້ອົງການປະຕິບັດຄຳຕັດສິນຂອງສານ ກວດກາການປະຕິບັດໜ້າທີ່ວຽກງານ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ;
6. ແຈ້ງອົງການປະຕິບັດຄຳຕັດສິນຂອງສານ ລາຍງານກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
7. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;
8. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 85 (ໃໝ່) ຄວາມຮັບຜິດຊອບ ອົງການປົກຄອງບ້ານ**

ໃນການປະຕິບັດຄຳຕັດສິນຂອງສານ ອົງການປົກຄອງບ້ານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ແຈ້ງຄຳສັ່ງປະຕິບັດ, ສິ່ງໝາຍຮຽກ, ໝາຍເຊີນ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງຕາມຄຳຕັດສິນຂອງສານ;
2. ສະໜອງຂໍ້ມູນ ດ້ານຕ່າງໆຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ອາໄສຢູ່ໃນຂອບເຂດບ້ານຂອງຕົນ;
3. ເຂົ້າຮ່ວມ ແລະ ອຳນວຍຄວາມສະດວກໃນການນຳໃຊ້ມາດຕະການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງກັບຜູ້ຖືກປະຕິບັດຄຳຕັດສິນຂອງສານ;
4. ຮ່ວມມືດ້ານອື່ນຕາມການສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ;
5. ມີຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 86 (ໃໝ່) ຄວາມຮັບຜິດຊອບຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 87 (ປັບປຸງ) ຂໍ້ຫ້າມ ສຳລັບພະນັກງານປະຕິບັດຄຳຕັດສິນຂອງສານ**

ຫ້າມພະນັກງານປະຕິບັດຄຳຕັດສິນຂອງສານ ກະທຳ ດັ່ງນີ້:

1. ກົດໜ່ວງຖ່ວງດຶງ, ເຂົ້າຂ້າງອອກຂາ, ເລືອກປະຕິບັດ ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
2. ເມີນເສີຍ, ລະເລີຍ ແລະ ຂາດຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ວຽກງານ;
3. ໃຊ້ທ່າທີບໍ່ເໝາະສົມ ໃນການປະຕິບັດໜ້າທີ່ວຽກງານ;
4. ປະຕິບັດເກີນຂອບເຂດ, ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ;
5. ຮັບສິນບົນ;
6. ເຈດຕະນາ ບໍ່ປະຕິບັດຕາມເນື້ອໃນຄຳຕັດສິນຂອງສານ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 88 (ປັບປຸງ) ຂໍ້ຫ້າມ ສຳລັບຄູ່ຄວາມ**

ຫ້າມຄູ່ຄວາມ ກະທຳ ດັ່ງນີ້:

1. ຫຼົບຫຼີກການປະຕິບັດ ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
2. ຊຸກເຊື່ອງ, ມອບ-ໂອນຊັບສິນ ເພື່ອຫຼີກລ້ຽງການປະຕິບັດຄຳຕັດສິນຂອງສານ;
3. ແອບອ້າງບຸກຄົນທີ່ມີສິດອຳນາດ ເພື່ອຂົ່ມຂູ່, ຖ່ວງດຶງ ແກ່ຍາວເວລາ ໃນການປະຕິບັດຄຳຕັດສິນຂອງສານ;
4. ໃຫ້ສິນບົນ ແກ່ພະນັກງານປະຕິບັດຄຳຕັດສິນຂອງສານ;
5. ຂົ່ມຂູ່, ຂັດຂວາງ ການປະຕິບັດຄຳຕັດສິນຂອງສານ;
6. ງັດແງະ, ມ້າງເພ ແລະ ທຳລາຍຊັບສິນ ທີ່ຖືກອາຍັດ ຫຼື ຍຶດ;
7. ທຳຮ້າຍ, ໃສ່ຮ້າຍປ້າຍສີ ພະນັກງານປະຕິບັດຄຳຕັດສິນຂອງສານ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 89 (ປັບປຸງ) ຂໍ້ຫ້າມ ສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ກະທຳ ດັ່ງນີ້:

1. ຍຸຍົງຄູ່ຄວາມ ບໍ່ໃຫ້ປະຕິບັດ ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
2. ຂັດຂວາງ ໃນການປະຕິບັດ ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
3. ເປັນສື່ກາງ ໃນການໃຫ້ ແລະ ຮັບສິນບົນ ແກ່ພະນັກງານປະຕິບັດຄຳຕັດສິນຂອງສານ;

4. ຮັບໂອນຊັບສິນ ທີ່ຕົນຮູ້ ຫຼື ຄວນຮູ້ວ່າຊັບສິນດັ່ງກ່າວຈະນໍາໃຊ້ເຂົ້າໃນການປະຕິບັດຄໍາຕັດສິນຂອງສານ;

5. ນໍາໃຊ້ຊັບສິນ ຫຼື ວັດຖຸສິ່ງຂອງ ທີ່ເປັນຂອງກາງຄະດີ, ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ເພື່ອຜົນປະໂຫຍດໃນທາງທີ່ບໍ່ຖືກຕ້ອງ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ IX
# ການຄຸ້ມຄອງ ແລະ ກວດກາ ການປະຕິບັດຄໍາຕັດສິນຂອງສານ

## ໝວດທີ 1
## ການຄຸ້ມຄອງການປະຕິບັດຄໍາຕັດສິນຂອງສານ

### ມາດຕາ 90 (ປັບປຸງ) ອົງການຄຸ້ມຄອງການປະຕິບັດຄໍາຕັດສິນຂອງສານ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານປະຕິບັດຄໍາຕັດສິນຂອງສານ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຍຸຕິທໍາ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

### ມາດຕາ 91 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທໍາ

ໃນການຄຸ້ມຄອງການປະຕິບັດຄໍາຕັດສິນຂອງສານ ກະຊວງຍຸຕິທໍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບການປະຕິບັດຄໍາຕັດສິນຂອງສານ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບການປະຕິບັດຄໍາຕັດສິນຂອງສານ ໃຫ້ກາຍເປັນ ແຜນການ, ແຜນງານ ແລະ ໂຄງການ ແລ້ວປະຕິບັດ;

3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບການປະຕິບັດຄໍາຕັດສິນຂອງສານ;

4. ຄຸ້ມຄອງທາງດ້ານການຈັດຕັ້ງ, ງົບປະມານ, ລາຍຮັບ-ລາຍຈ່າຍ ຂອງອົງການປະຕິບັດຄໍາຕັດສິນຂອງສານ;

5. ຕົກລົງສ້າງຕັ້ງ ຫຼື ຍົກເລີກ ອົງການປະຕິບັດຄໍາຕັດສິນຂອງສານ ແຕ່ລະຂັ້ນ, ແຕ່ງຕັ້ງ, ຍົກຍ້າຍ, ສັບຊ້ອນ ຫຼື ປົດຕໍາແໜ່ງ ບຸກຄະລາກອນ ຂອງອົງການປະຕິບັດຄໍາຕັດສິນຂອງສານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ສະເໜີອົງການໄອຍະການປະຊາຊົນສູງສຸດ ພິຈາລະນາຮື້ຟື້ນຄະດີກ່ຽວກັບຄໍາຕັດສິນຂອງສານ ທີ່ບໍ່ສອດຄ່ອງກັບຄວາມເປັນຈິງ;

7. ສະເໜີບັນຫາກ່ຽວກັບການປະຕິບັດຄໍາຕັດສິນຂອງສານ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ;

8. ປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ນິຕິກຳຂອງກົມ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ທີ່ບໍ່ຖືກຕ້ອງຕາມຄຳຕັດສິນ ຫຼື ຕາມກົດໝາຍ;

9. ສະເໜີໃຫ້ຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ລົບລ້າງນິຕິກຳຂອງຕົນ ທີ່ບໍ່ສອດຄ່ອງກັບກົດໝາຍ, ຄຳຕັດສິນ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບການປະຕິບັດຄຳຕັດສິນຂອງສານ;

10. ກໍ່ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ຂອງອົງການປະຕິບັດຄຳຕັດສິນຂອງສານ ທາງດ້ານການເມືອງ-ແນວຄິດ, ຄຸນສົມບັດ, ຈັນຍາທຳ ແລະ ວິຊາສະເພາະ;

11. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

12. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

13. ສະຫຼຸບ ແລະ ລາຍງານ ການປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາ ການປະຕິບັດຄຳຕັດສິນຂອງສານ

### ມາດຕາ 92 (ປັບປຸງ) ອົງການກວດກາ ການປະຕິບັດຄຳຕັດສິນຂອງສານ

ອົງການກວດກາ ມີດັ່ງນີ້:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 91 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການໄອຍະການປະຊາຊົນ.

### ມາດຕາ 93 (ປັບປຸງ) ເນື້ອໃນການກວດກາ

ເນື້ອໃນຕົ້ນຕໍຂອງການກວດກາ ມີດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
2. ຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
3. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການປະຕິບັດຄຳຕັດສິນຂອງສານ;
4. ການຄຸ້ມຄອງ ແລະ ການນຳໃຊ້ລາຍຮັບ-ລາຍຈ່າຍ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;
5. ຄວາມຮັບຜິດຊອບ ແລະ ການປະພຶດ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ.

### ມາດຕາ 94 (ໃໝ່) ຮູບການກວດກາ

ການກວດກາ ການປະຕິບັດຄຳຕັດສິນຂອງສານ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການກວດກາ ການປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ພາກທີ X
## ງົບປະມານ, ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ

### ມາດຕາ 95 (ປັບປຸງ) ງົບປະມານ

ອົງການປະຕິບັດຄຳຕັດສິນຂອງສານ ມີງົບປະມານ ຂຶ້ນກັບກະຊວງຍຸຕິທຳ ຊຶ່ງຕ້ອງໄດ້ຂຶ້ນແຜນ, ຄຸ້ມຄອງ ແລະ ນຳໃຊ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານ ມີດັດຊະນີຊັ້ນ-ຂັ້ນເງິນເດືອນ ແລະ ນະໂຍບາຍອຸດໜູນສະເພາະ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 96 (ປັບປຸງ) ເຄື່ອງແບບ ແລະ ເຄື່ອງໝາຍ

ອົງການປະຕິບັດຄຳຕັດສິນຂອງສານ ມີ ເຄື່ອງແບບ ແລະ ເຄື່ອງໝາຍສະເພາະ ຊຶ່ງໄດ້ຮັບອານຸຍາດຈາກລັດຖະບານ ຕາມການສະເໜີຂອງລັດຖະມົນຕີກະຊວງຍຸຕິທຳ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງນຸ່ງເຄື່ອງແບບ ແລະ ຕິດເຄື່ອງໝາຍສະເພາະ ໃນເວລາປະຕິບັດໜ້າທີ່ທາງລັດຖະການ.

### ມາດຕາ 97 (ປັບປຸງ) ຕາປະທັບ

ອົງການປະຕິບັດຄຳຕັດສິນຂອງສານ ມີຕາປະທັບ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ.

ຕາປະທັບ ຂອງອົງການປະຕິບັດຄຳຕັດສິນຂອງສານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 98 (ປັບປຸງ) ນະໂຍບາຍ ຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ປະກອບສ່ວນ ໃນການປະຕິບັດຄຳຕັດສິນຂອງສານ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 99 (ປັບປຸງ) ມາດຕະການ ຕໍ່ຜູ້ລະເມີດ

ພະນັກງານປະຕິບັດຄຳຕັດສິນຂອງສານ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 87, 88 ແລະ 89 ຂອງກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 100 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 101 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 04/ສພຊ, ລົງວັນທີ 25 ກໍລະກົດ 2008.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**